ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-12 ທັນວາ 2022
ປີທີ 11
ສະບັບທີ 898

## ສສຊ ລົງຄະແນນສຽງໃສ່ຮ່າງມະຕິ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ




(ສພຊ) ໃນລະຫວ່າງວັນທີ 5-6 ທັນວາ 2022 ພາຍໃຕ້ການເປັນປະທານຂອງພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ພ້ອມດ້ວຍບັນດາທ່ານຮອງປະທານສະພາແຫ່ງຊາດ ເຂົ້າຮ່ວມເປັນຄະນະປະທານກອງປະຊຸມ; ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ດຳເນີນໄປຢ່າງມີຈຸດສຸມ ແລະ ກົງໄປກົງມາ ໂດຍປະທານກອງປະຊຸມໄດ້ຕັ້ງຄຳຖາມເຈາະຈີ້ມ ແລະ ໃຫ້ທິດຊີ້ນຳໃນການຄົ້ນຄວ້າປະກອບຄຳເຫັນຢ່າງເລິກເຊິ່ງ ເຮັດໃຫ້ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ໄດ້ສຸມໃສ່ປະກອບຄຳຄິດຄຳເຫັນຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023, ບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ປີ 2021; ການຈັດຕັ້ງງົບປະມານປີ 2022 ແລະ ທິດທາງແຜນງົບປະມານແຫ່ງລັດ ປີ 2023; ການຈັດຕັ້ງປະຕິບັດແຜນເງິນຕາ ປະຈຳປີ 2022 ແລະ ແຜນການປະຈຳປີ 2023.

ພ້ອມນັ້ນ, ຍັງໄດ້ຊັກຖາມເຈາະຈີ້ມກັບທີ່ຕໍ່ບັນຫາຕ່າງໆ ທີ່ໄດ້ຮັບຟັງການຊີ້ແຈງຈາກທ່ານລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ລັດຖະມົນຕີກະຊວງການເງິນ, ຜູ້ວ່າການທະນາຄານ ແຫ່ງ ສປປລາວ, ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ, ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ, ລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ລັດຖະມົນຕີກະຊວງພາຍໃນ,

ອ່ານຕໍ່ໜ້າ 2

## ປະທານ ໄກສອນ ພົມວິຫານ ຍືນຍົງໃນພາລະກິດປະຕິວັດຂອງພວກເຮົາຕະຫລອດໄປ

ໂດຍ: ສີວັນ

ຄຸນງາມຄວາມດີ ແລະ ພາລະກິດຂອງປະທານ ໄກສອນ ພົມວິຫານ ແມ່ນໃຫຍ່ຫລວງທີ່ສຸດ, ອຸດົມຄະຕິ ແລະ ການອຸທິດຊີວິດຂອງເພິ່ນແມ່ນຕິດພັນສະໜິດແໜ້ນກັບການເຄື່ອນໄຫວນຳພາຂອງພັກເຮົາຕະຫລອດມາ. ສະນັ້ນ, ພວກເຮົາເກີດໃໝ່ໃຫຍ່ລຸນ ຈຶ່ງພ້ອມກັນສືບຕໍ່ເພີ່ມພູນຄູນສ້າງມູນມໍລະດົກອັນລ້ຳຄ່າທີ່ປະທານ ໄກສອນ ພົມວິຫານ ໄດ້ສ້າງໄວ້ ເຮັດໃຫ້ອຸດົມຄະຕິຂອງເພິ່ນຍືນຍົງ ແລະ ກາຍເປັນການປະພຶດຕົວຈິງໃນພາລະກິດປະຕິວັດຂອງທົ່ວພັກ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນເຮົາຕະຫລອດໄປ ສືບຕໍ່ເຮັດໃຫ້ອຸດົມການຂອງເພິ່ນໃຫ້ປາກົດຜົນເປັນຈິງໃນທຸກຂົງເຂດວຽກງານ ຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ.

ໃນພາລະກິດແຫ່ງການສ້າງສາລະບອບໃໝ່, ປະທານ ໄກສອນ ພົມວິຫານ ຍິ່ງເຊີດຊູຄວາມຮັບຜິດຊອບຂອງຕົນ ໃນການວາງແນວທາງການປະຕິວັດຢ່າງຄ່ອງແຄ້ວ ແລະ ຖືກຕ້ອງ ໂດຍຖືພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຕາມທິດກ້າວຂຶ້ນສັງຄົມນິຍົມ ເປັນຕົ້ນແມ່ນ 2 ໜ້າທີ່ຍຸດທະສາດສຳລັບທົ່ວພັກ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນ. ປະທານ ໄກສອນ ພົມວິຫານ ໄດ້ນຳພາ-ຊີ້ນຳ ການຈັດຕັ້ງປະຕິບັດຢ່າງຈິງໃຈ, ເຮັດໃຫ້ພາລະກຳປະຫວັດສາດ ອັນໜັກໜ່ວງຂອງການປະຕິວັດລາວ ໃນໄລຍະໃໝ່ໄດ້ຮັບໄຊຊະນະ, ປະເທດຊາດມີສັນຕິ

ອ່ານຕໍ່ໜ້າ 7

## ການຈັດຕັ້ງປະຕິບັດງົບປະມານແຫ່ງລັດ 11 ເດືອນ ສາມາດປະຕິບັດໄດ້ 28.455 ຕື້ກີບ ເທົ່າກັບ 90,06%



(ສພຊ) ໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປີ 2021, ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 11 ເດືອນ, ຄາດຄະເນໝົດປີ 2022 ແລະ ທິດທາງແຜນງົບປະມານແຫ່ງລັດ ປີ 2023 ໃນວັນທີ 5 ທັນວາ 2022 ທ່ານ ບຸນໂຈມ ອຸບົນປະເສີດ ລັດຖະມົນຕີກະຊວງການເງິນ ໄດ້ລາຍງານ

ອ່ານຕໍ່ໜ້າ 2

## ຄະນະປະຈຳສະພາແຫ່ງຊາດ ປະກອບຄຳເຫັນຕໍ່ບົດລາຍງານຂອງລັດຖະບານ



(ສພຊ) ໃນວັນທີ 5 ທັນວາ 2022 ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ໄດ້ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ປະກອບຄຳເຫັນຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຄາດຄະເນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023; ຄະນະປະຈຳສະພາແຫ່ງຊາດ ແລະ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ມີບາງຂໍ້ສັງເກດ ແລະ ທັດສະນະ ດັ່ງນີ້:

**I. ຕໍ່ກັບການຄາດຄະເນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາປະຈຳປີ 2022.**

1. ຄາດຄະເນການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

ຄະນະປະຈຳສະພາແຫ່ງຊາດເຫັນວ່າລັດຖະບານໄດ້ມີຄວາມພະຍາຍາມຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄລຍະ 9 ເດືອນ ແລະ ຄາດຄະເນໝົດປີ 2022 ເຊິ່ງສາມາດຍາດໄດ້ຜົນສຳເລັດທີ່ພົ້ນເດັ່ນໃນຫລາຍດ້ານ ເປັນຕົ້ນ:

1) ຮັກສາໄດ້ສະຖຽນລະພາບທາງດ້ານການເມືອງໜັກແໜ້ນ, ເສດຖະກິດສືບຕໍ່ເຕີບໂຕຂະຫຍາຍຕົວ, ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ;

2) ລວມຍອດຜະລິດຕະພັນພາຍໃນ (GDP) ໄດ້ສືບຕໍ່ເຕີບໂຕຕໍ່ເນື່ອງ, ປະຕິບັດ 9 ເດືອນ ບັນລຸ

ອ່ານຕໍ່ໜ້າ 7

## ຄາດໝາຍດ້ານເງິນຕາ ປີ 2023 ຈະຄວບຄຸມ ອັດຕາເງິນເຟີ້ສະເລ່ຍໝົດປີ ໃຫ້ຢູ່ໃນລະດັບບໍ່ເກີນ 9%



(ສພຊ) ທ່ານ ບຸນເຫລືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານແຫ່ງ ສປປລາວ ໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນເງິນຕາ ປີ 2022 ແລະ ແຜນເງິນຕາປະຈຳປີ 2023 ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃນວັນທີ 5 ທັນວາ 2022 ວ່າ: ຕໍ່ສະພາບສາກົນ ແລະ ພາຍໃນທີ່ທ້າທາຍ, ທະນາຄານແຫ່ງ ສປປລາວ ໄດ້

ອ່ານຕໍ່ໜ້າ 2

## ກອງປະຊຸມສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ ປະຈຳພາກພື້ນອາຊີ-ປາຊີຟິກ

(ສພຊ) ໃນລະຫວ່າງວັນທີ 28-30 ພະຈິກຜ່ານມານີ້, ທ່ານ ວຽງວິໄລ ທ່ຽງຈັນໄຊ ສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງທີ 1 ນະຄອນຫລວງວຽງຈັນ, ປະທານຄະນະມິດຕະພາບລັດຖະສະພາລາວ-ຝຣັ່ງ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງປະຈຳພາກພື້ນອາຊີ-ປາຊີຟິກ ຄັ້ງ 10 ທີ່ນະຄອນດານັງ, ສສ.ຫວຽດນາມ. ກອງປະຊຸມດັ່ງກ່າວ, ມີຄະນະຜູ້ແທນຈາກປະເທດສະມາຊິກຂອງສະມັດຊາລັດຖະສະພາປະເທດທີ່

ອ່ານຕໍ່ໜ້າ 2


ໜ້າ 4


ໜ້າ 4


ໜ້າ 4


ໜ້າ 4


ໜ້າ 5


ໜ້າ 5

ຊົມເຊີຍກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງສຸດໃຈ!



## ກອງປະຊຸມ...

ໃຊ້ພາສາຝຣັ່ງ ໃນພາກພື້ນອາຊີ-ປາຊີຟິກ 6 ປະເທດ ຄື: ລາວ, ກຳປູເຈຍ, ນູແວນກາເລໂດນີ, ໂປລີນີຊີ ຝຣັ່ງແຊ ແລະ ຫວຽດນາມ (ເຈົ້າພາບ) ພ້ອມດ້ວຍຕົວແທນລັດຖະສະພາທີ່ໃຊ້ພາສາຝຣັ່ງຈາກພາກພື້ນອື່ນໆ ແລະ ຄະນະເລຂາທິການສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ (APF) ລວມທັງໝົດຈຳນວນ 70 ທ່ານ ເຂົ້າຮ່ວມ.

ກອງປະຊຸມ, ໄດ້ຮັບຟັງການລາຍງານການເຄື່ອນໄຫວວຽກງານຂອງບັນດາປະເທດສະມາຊິກ APF ແລະແລກປ່ຽນຄຳຄິດເຊິ່ງກັນແລະກັນຕໍ່ກັບການປະຕິບັດໜ້າທີ່ວຽກງານຂອງລັດຖະສະພາທີ່ໃຊ້ພາສາຝຣັ່ງໃນພາກພື້ນອາຊີ-ປາຊີຟິກ ພ້ອມທັງໄດ້ຮ່ວມກັນຄົ້ນຄວ້າ ແລະ ພິຈາລະນາຮັບຮອງເອົາການປັບປຸງລະບຽບການເພີ່ມເຕີມຂອງ APF ໃນພາກພື້ນອາຊີ-ປາຊີຟິກ. ນອກຈາກນີ້, ກອງປະຊຸມຍັງໄດ້ຮ່ວມກັນປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນກ່ຽວກັບຫລາຍບັນຫາສຳຄັນ ທີ່ເປັນສິ່ງທ້າຍ ແລະ ຄວາມກັງວົນຮ່ວມກັນຂອງພາກພື້ນ ໂດຍສະເພາະແມ່ນໃນຂອບເຂດປະເທດຝຣັ່ງໂກໂຟນີ.

ໃນການເຂົ້າຮ່ວມກອງປະຊຸມຄັ້ງນີ້, ຄະນະຜູ້ແທນລາວ ໄດ້ລາຍງານສະພາບການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດລາວໃນໄລຍະຜ່ານມາ, ສະເໜີບົດປະກອບຄຳເຫັນຕໍ່ກອງປະຊຸມກ່ຽວກັບການປ່ຽນແປງຂອງດິນຟ້າອາກາດ ແລະ ບົດສະເໜີກ່ຽວກັບບົດບາດຂອງລັດຖະສະພາໃນການຄວບຄຸມວິກິດການດ້ານສາທາລະນະສຸກ, ຜົນຮ້າຍຂອງໄພພິບັດທາງທຳມະຊາດ ແລະ ການປ່ຽນແປງດິນຟ້າອາກາດ ທີ່ສິ່ງຜົນກະທົບອັນໜັກໜ່ວງໃຫ້ແກ່ການພັດທະນາແບບຍືນຍົງ ລວມທັງວິທີການແກ້ໄຂບັນຫາ, ການຮັບມື ແລະ ຫລຸດຜ່ອນຜົນກະທົບທີ່ເກີດຈາກການປ່ຽນແປງຂອງສະພາບດິນຟ້າອາກາດ ໂດຍການວາງເງື່ອນໄຂໃນການຫລຸດຜ່ອນການປ່ອຍມົນລະພິດ. ຂະນະດຽວກັນ, ກໍໄດ້ສະແດງໃຫ້ເຫັນເຖິງຄວາມຈິງຈັງ ແລະ ໃຫ້ຄວາມສຳຄັນຂອງລັດຖະບານ ກໍຄືສະພາແຫ່ງຊາດລາວ ໃນການໃຊ້ມາດຕະການເພື່ອຮັບມືກັບກະທົບໃນທຸກດ້ານຕໍ່ການພັດທະນາເສດຖະກິດ-ສັງຄົມ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ເປັນຕົ້ນແມ່ນສຸມໃສ່ການພັດທະນາດ້ານການແພດ, ເຄື່ອງມືການປິ່ນປົວ ແລະ ຢາປົວພະຍາດໃຫ້ມີຄວາມພຽງພໍ ເຊິ່ງເປັນປັດໄຈສຳຄັນໃນການຫລຸດຜ່ອນຂອງຜູ້ຕິດເຊື້ອພະຍາດ ລວມທັງສ້າງການປ້ອງກັນ ຄວບຄຸມ ແລະ ສະກັດກັ້ນການແຜ່ລະບາດຂອງເຊື້ອພະຍາດໃນອະນາຄົດ.

ໃນຕອນທ້າຍຂອງກອງປະຊຸມ, ຄະນະຜູ້ແທນໄດ້ຮ່ວມກັນຮັບຮອງ ແລະ ກຳນົດວາລະກອງປະຊຸມປະຈຳພາກພື້ນອາຊີ-ປາຊີຟິກຂອງສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ ໃນຄັ້ງຕໍ່ໄປ ກໍຄືຄັ້ງທີ 11 ເຊິ່ງໃນສອງປີຂ້າງໜ້າ ທີ່ເກາະນູແວນກາລີໂດນີ (ປາຊີຟິກ).

## ສສຊ...

ລັດຖະມົນຕີກະຊວງເຕັກໂນໂລຊີ ແລະ ການສື່ສານ.

ກອງປະຊຸມໄດ້ຮັບຟັງການລາຍງານ ແລະ ສຸມໃສ່ປະກອບຄຳເຫັນຕໍ່ບົດລາຍງານທີ່ທ່ານ ສອນໄຊ ສີພັນດອນ ຮອງນາຍົກລັດຖະມົນຕີ ໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ທ່ານ ພຶ. ວິໄລ ຫລ້າຄຳຟອງ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ທີ່ລາຍງານກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ; ລາຍງານການສ້າງວິຊາຊີບ, ການພັດທະນາສີມືແຮງງານ ແລະ ວຽກເຮັດງານທຳໃຫ້ປະຊາຊົນ ເພື່ອແກ້ໄຂບັນຫາການວ່າງງານຈາກທ່ານ ນາງ ໃບຄຳ ຂັດຕິຍະ ລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

ໂອກາດດັ່ງກ່າວ, ຍັງໄດ້ຮັບຟັງການປະກອບຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ ໂດຍແມ່ນທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ປະກອບຄຳເຫັນກ່ຽວກັບບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ; ທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ ປະກອບຄຳເຫັນກ່ຽວກັບບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ; ທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການວັດທະນະທຳ-ສັງຄົມ ປະກອບຄຳເຫັນກ່ຽວກັບບົດລາຍງານການສ້າງວິຊາຊີບ, ການພັດທະນາສີມືແຮງງານ ແລະ ວຽກເຮັດງານທຳໃຫ້ປະຊາຊົນ ເພື່ອແກ້ໄຂບັນຫາການວ່າງງານ; ພ້ອມນັ້ນ, ບັນດາທ່ານ ສສຊ ກໍໄດ້ປະກອບຄຳເຫັນ ແລະ ຮັບຟັງການຊີ້ແຈງເພີ່ມເຕີມຈາກທ່ານ ພັນຄຳ ວິພາວັນ ນາຍົກລັດຖະມົນຕີ, ບັນດາກະຊວງ ແລະ ພາກສ່ວນກ່ຽວຂ້ອງຕື່ມອີກ.

ໃນຕອນທ້າຍ, ທ່ານ ນາງ ປິ່ງຄຳ ລາຊະສິມມາ ຫົວໜ້າກອງເລຂານຸການກອງປະຊຸມ ໄດ້ສະເໜີຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ປີ 2021; ການຈັດຕັ້ງງົບປະມານປີ 2022 ແລະ ທິດທາງການສ້າງແຜນງົບປະມານແຫ່ງລັດ ປີ 2023 ເຊິ່ງບັນດາທ່ານ ສສຊ ໄດ້ປະກອບຄຳເຫັນຕໍ່ຮ່າງມະຕິດັ່ງກ່າວ ແລະ ລົງຄະແນນສຽງຮັບຮອງເອົາມະຕິດັ່ງກ່າວ ດ້ວຍຄະແນນສຽງເຫັນດີ 138 ທ່ານ, ບໍ່ເຫັນດີ 1 ທ່ານ, ບໍ່ອອກສຽງ 1 ທ່ານ ໃນຈຳນວນ ສສຊ ທີ່ເຂົ້າຮ່ວມທັງໝົດ 140 ທ່ານ.

(ນາງ ປາກາລັກ ພົມມີໄຊ)

## ການຈັດຕັ້ງ...

ໃຫ້ຮູ້ວ່າ: ຜ່ານການສູ້ຊົນຈັດຕັ້ງປະຕິບັດງົບປະມານແຫ່ງລັດ 11 ເດືອນ ສາມາດປະຕິບັດໄດ້ທັງໝົດ 28.455 ຕື້ກີບ ເທົ່າກັບ 90,06% ຂອງແຜນການປີ (ບໍ່ລວມເອົາລາຍຮັບຈາກການຫລຸດຜ່ອນອັດຕາອາກອນຊົມໃຊ້ເພື່ອດັດສົມລາຄານ້ຳມັນທີ່ລັດຖະບານໄດ້ຊ່ວຍໜູນພະນັກງານ, ທະຫານ, ຕຳຫລວດ ຮອດປະຊາຊົນທົ່ວສັງຄົມ ຈຳນວນ 2.819 ຕື້ກີບ) ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 26% (ເປັນເງິນເທົ່າກັບ 5.849 ຕື້ກີບ) ຫລື ເທົ່າກັບ 14,81% ຂອງ GDP ຕາມມະຕິສະພາ, ຖ້າທຽບໃສ່ຕົວເລກ GDP ໃໝ່ ຈະຫລຸດລົງມາເປັນ 13,40% ຂອງ GDP. ສຳລັບລາຍຮັບພາຍໃນປະຕິບັດໄດ້ 26.655 ຕື້ກີບ ເທົ່າກັບ 92,03% ຂອງແຜນການປີ ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 29% (ເປັນເງິນເທົ່າກັບ 5.980 ຕື້ກີບ) ຄາດຄະເນລາຍຮັບໝົດປີ 2022 ຈະປະຕິບັດໃຫ້ໄດ້ 32.447 ຕື້ກີບ ເທົ່າກັບ 102,70% ຫລື ເທົ່າກັບ 16,88% ຂອງ GDP (ມະຕິສະພາແຫ່ງຊາດຮັບຮອງ 16,44% ຂອງ GDP), ໃນນີ້: ລາຍຮັບພາຍໃນ 30.025 ຕື້ກີບ ເທົ່າກັບ 103,67% ຂອງແຜນການປີ ແລະ ໃນທ້າຍປີ 2022 ໄດ້ຄົ້ນຄວ້າຫລາຍມາດຕະການເພີ່ມເຕີມ ເພື່ອສູ້ຊົນຈັດຕັ້ງປະຕິບັດລາຍຮັບໃຫ້ບັນລຸໄດ້ທັງໝົດ 33.574 ຕື້ກີບ ເທົ່າກັບ 106,27% ຂອງແຜນການປີ ເຊິ່ງເຫັນວ່າສາມາດບັນລຸໄດ້ 17,47% ຂອງ GDP (ມະຕິສະພາແຫ່ງຊາດຮັບຮອງ 16,44% ຂອງ GDP, ຖ້າທຽບໃສ່ຕົວເລກ GDP ໃໝ່ ຈະເຮັດໃຫ້ລາຍຮັບຫລຸດລົງມາເປັນ 15,81% ຂອງ GDP).

ການຈັດຕັ້ງປະຕິບັດລາຍຈ່າຍງົບປະມານແຫ່ງລັດ 11 ເດືອນ ສາມາດປະຕິບັດໄດ້ 25.694 ຕື້ກີບ ເທົ່າກັບ 72,56% ຂອງແຜນການປີ, ໃນນີ້: ຂັ້ນສູນກາງປະຕິບັດໄດ້ 17.871 ຕື້ກີບ ເທົ່າກັບ 69,96% ຂອງແຜນການປີ ແລະ ຂັ້ນທ້ອງຖິ່ນປະຕິບັດໄດ້ 7.824 ຕື້ກີບ ເທົ່າກັບ 79,27% ຂອງແຜນການປີ (ສຳລັບການເບີກຈ່າຍເງິນເດືອນຂັ້ນສູນກາງສຳເລັດ ຮອດເດືອນພະຈິກ 2022, ສ່ວນຂັ້ນທ້ອງຖິ່ນສຳເລັດເປັນສ່ວນໃຫຍ່). ຄາດຄະເນລາຍຈ່າຍໝົດປີ 34.553 ຕື້ກີບ ເທົ່າກັບ 99,60% ຂອງແຜນການປີ ຫລື ເທົ່າກັບ 17,97% ຂອງ GDP (ມະຕິສະພາແຫ່ງຊາດ ຮັບຮອງ 18,05% ຂອງ GDP), ຖ້າທຽບໃສ່ຕົວເລກ GDP ໃໝ່ ຈະເຮັດໃຫ້ລາຍຈ່າຍຫລຸດລົງມາເປັນ 16,27% ຂອງ GDP ເຫັນວ່າຄາດຄະເນຈະສາມາດຫລຸດຜ່ອນລາຍຈ່າຍ ຫລື ປະຢັດໄດ້ ປະມານ 138 ຕື້ກີບ; ສ່ວນການຄາດຄະເນການຂາດດຸນງົບປະມານ ຈະຫລຸດລົງຕາມມະຕິຂອງສະພາແຫ່ງຊາດ ຈາກ 3.098 ຕື້ກີບ ເທົ່າກັບ 1,61% ຂອງ GDP ມາເປັນ 979 ຕື້ກີບ ເທົ່າກັບ 0,51% ຂອງ GDP (ຫລຸດລົງ 2.119 ຕື້ກີບ, ໃນນີ້: ຈາກການຄາດຄະເນລາຍຮັບໄດ້ເກີນແຜນປະມານ 6,27% ຫລື ປະມານ 1.981 ຕື້ກີບ ແລະ ຄາດຄະເນຈາກການຫລຸດຜ່ອນລາຍຈ່າຍ ຫລື ປະຢັດໄດ້ຕື່ມ ປະມານ 138 ຕື້ກີບ). ຖ້າທຽບໃສ່ຕົວເລກ GDP ໃໝ່ ຈະເຮັດໃຫ້ການຂາດດຸນເພີ່ມຂຶ້ນ ມາເປັນ 0,99% ຂອງ GDP.

ສຳລັບການຊຳລະໜີ້ສິນສາທາລະນະ; ໃນນັ້ນ, ການຊຳລະໜີ້ສິນພາຍໃນ ໃນປີ 2022 ແຜນມີຈຳນວນທັງໝົດ 10.083 ຕື້ກີບ, ໃນນີ້: ຕົ້ນທຶນ 8.658 ຕື້ກີບ ແລະ ດອກເບ້ຍ 1.425 ຕື້ກີບ, ໄດ້ຊຳລະແລ້ວ 5.381 ຕື້ກີບ ເທົ່າກັບ 53,37% ຂອງແຜນການປີ; ສ່ວນການຊຳລະໜີ້ສິນຕ່າງປະເທດ ໃນປີ 2022 ແຜນມີທັງໝົດຈຳນວນ 1.241,49 ລ້ານໂດລາ, ໃນນີ້: ຕົ້ນທຶນ 824,18 ລ້ານໂດລາ ແລະ ດອກເບ້ຍ 417,31 ໂດລາ. ໄດ້ຊຳລະແລ້ວ 520,04 ລ້ານໂດລາ ສຫລ ທຽບໃສ່ຈຳນວນໜີ້ສິນທີ່ຕ້ອງຊຳລະຕົວຈິງ 660,17 ລ້ານໂດລາ ເທົ່າກັບ 78,77% ຮັບປະກັນໃຫ້ການຊຳລະໜີ້ສິນສຳເລັດໄດ້ຕາມແຜນການ.

ມາດຕະການປະຢັດ ແລະ ຕ້ານການຟຸມເຟືອຍ: ການຈັດຕັ້ງປະຕິບັດດຳລັດວ່າດ້ວຍລົດຂອງລັດ ສະບັບເລກທີ 599/ລບ ໄດ້ສັງລວມຂໍ້ມູນລົດລັດເບື້ອງຕົ້ນ ໃນຂອບເຂດທົ່ວປະເທດ ມີທັງໝົດຈຳນວນ 39.754 ຄັນ, ໃນນັ້ນ: ລົດຈັກ 25.181 ຄັນ, ລົດໃຫຍ່ 14.564 ຄັນ: ສູນກາງ 7.401 ຄັນ ແລະ ທ້ອງຖິ່ນ 30.785 ຄັນ (ລວມຈຳນວນລົດທີ່ພະນັກງານບຳນານຢູ່ຂັ້ນສູນກາງນຳໃຊ້ 1.559 ຄັນ, ຍັງບໍ່ທັນລວມລົດພະນັກງານບຳນານນຳໃຊ້ ຢູ່ຂັ້ນທ້ອງຖິ່ນ); ໄດ້ຊຸກຍູ້, ຕິດຕາມ, ກວດກາ ແລະ ເຜີຍແຜ່ການຈັດຕັ້ງປະຕິບັດດຳລັດ ວ່າດ້ວຍລົດຂອງລັດ ແລະ ເກັບກຳກວດກາຄືນບັນດາບັນຊີສະຖິຕິລົດຂອງລັດ ຢູ່ຂັ້ນສູນກາງ 40 ພາກສ່ວນ, ໃນນີ້: ໄດ້ປ້ອນຂໍ້ມູນສະຖິຕິລົດຂອງລັດເຂົ້າໃນລະບົບຄຸ້ມຄອງຂໍ້ມູນຊັບສິນແຫ່ງລັດ (AMIS) ສຳເລັດຈຳນວນ 39 ພາກສ່ວນ ແລະ ໄດ້ຕິດແຜ່ນກາໝາຍການນຳໃຊ້ລົດລັດ ແລະ QR code ສຳເລັດຈຳນວນ 38 ພາກສ່ວນ; ສຳລັບຂັ້ນທ້ອງຖິ່ນ ສຳເລັດການລົງຊຸກຍູ້, ກວດກາ ແລະ ເຜີຍແຜ່ 8 ແຂວງ (ຫລວງນ້ຳທາ, ໄຊຍະບູລີ, ຫລວງພະບາງ, ອຸດົມໄຊ, ບໍ່ແກ້ວ, ນະຄອນຫລວງວຽງຈັນ, ວຽງຈັນ ແລະ ບໍລິຄຳໄຊ); ສຳເລັດການຖອນລົດເກົ່າທີ່ໃຊ້ການບໍ່ໄດ້ຈາກ 7 ພາກສ່ວນ (ກະຊວງສາທາລະນະສຸກ, ກະຊວງເຕັກໂນໂລຊີ ແລະການສື່ສານ, ກະສິກຳ ແລະ ປ່າໄມ້, ສະຖາບັນການເມືອງການປົກຄອງແຫ່ງຊາດ, ຄະນະໂຄສະນາອົບຮົມສູນກາງພັກ, ສູນກາງສະຫະພັນກຳມະບານ ແລະ ສູນກາງສະຫະພັນແມ່ຍິງ) ຈຳນວນ 42 ຄັນ, ໃນນີ້: ລົດຈັກ 11 ຄັນ ແລະ ລົດໃຫ່ຍ 31 ຄັນ; ພ້ອມນັ້ນ, ໄດ້ຈັດຕັ້ງປະຕິບັດການປະຕິຮູບ 5 ລັດວິສາຫະກິດ ຄື:

1. ລັດວິສາຫະກິດ ໄຟຟ້າລາວ (ຟຟລ)
2. ລັດວິສາຫະກິດນ້ຳມັນເຊື້ອໄຟລາວ
3. ບໍລິສັດຜະລິດ-ໄຟຟ້າລາວມະຫາຊົນ
4. ລັດວິສາຫະກິດການບິນລາວ
5. ລັດວິສາຫະກິດພັດທະນາກະສິກຳ, ອຸດສາຫະກຳ ແລະ ບໍລິການຂາເຂົ້າ-ຂາອອກ (ພອກ)

ສຳລັບທິດທາງແຜນງົບປະມານແຫ່ງລັດ ປີ 2023:

1). ສູ້ຊົນຮັບປະກັນແກ້ໄຂບັນຫາຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໃຫ້ສຳເລັດຕາມບັນດາຄາດໝາຍທີ່ໄດ້ກຳນົດໄວ້ໃນວາລະແຫ່ງຊາດ ໃນປີ 2023, ໃນນີ້ ແມ່ນຮັບປະກັນການສ້າງຄວາມເຂັ້ມແຂງ ແລະ ການເພີ່ມຂຶ້ນຂອງລາຍຮັບງົບປະມານແຫ່ງລັດ ສູ້ຊົນຈັດຕັ້ງປະຕິບັດ ດຳລັດ ວ່າດ້ວຍການປະຢັດ ແລະ ຕ້ານການຟຸມເຟືອຍ ສະບັບເລກທີ 205/ລບ ໃຫ້ເປັນຮູບປະທຳ ເພື່ອສ້າງທ່າແຮງໃຫ້ການສະສົມແຫ່ງລັດໃຫ້ເພີ່ມຂຶ້ນ, ເດັດຂາດບໍ່ໃຫ້ຕົກເຂົ້າໃນການເກີດວິກິດການ ແລະ ເປັນປະເທດທີ່ບໍ່ສາມາດຊຳລະໜີ້ສິນໄດ້ ແລະ ຍົກລະດັບຄວາໜ້າເຊື່ອຖື ຂອງ ສປປ ລາວ ຕໍ່ສາກົນໃຫ້ສູງຂຶ້ນ;

2). ຮັບປະກັນການເກັບລາຍຮັບຈາກຖານທີ່ມີໃນປະຈຸບັນ ໃຫ້ຄົບຖ້ວນ, ຖືກຕ້ອງ, ໂປ່ງໃສ, ຊຶ່ງທຸກຂະແໜງການ ທັງສູນກາງ ແລະ ທ້ອງຖິ່ນຕ້ອງເປັນເຈົ້າການໃນການຮັບຜິດຊອບ ໃນການຂຸດຄົ້ນທກທ່າແຮງບົ່ມຊ້ອນທັງໝົດເຂົ້າງົບປະມານ, ບໍ່ອະນຸຍາດໃຫ້ເກັບລາຍຮັບ ໄປໃຊ້ຈ່າຍນອກລະບົບງົບປະມານເດັດຂາດ;

3). ສຳລັບລາຍຈ່າຍງົບປະມານແຫ່ງລັດ ແມ່ນຮັບປະກັນຕາມທິດປະຢັດ ແລະ ຕ້ານການຟຸມເຟືອຍ ຕາມດຳລັດ ສະບັບເລກທີ 205/ລບ ຢ່າງເປັນຮູບປະທຳ, ໃນນີ້ ຮັບປະກັນການປັບປຸງຊີວິດການເປັນຢູ່ຂອງພະນັກງານ-ລັດຖະກອນ, ທະຫານ-ຕຳຫລວດ, ພະນັກງານບຳນານ, ຜູ້ດ້ອຍໂອກາດ, ຕ້ານການຟຸມເຟືອຍໃນທຸກຮູບແບບ ສຳລັບລາຍຈ່າຍບໍລິຫານລັດ, ໂຈະການລົງທຶນໃໝ່ ແລະ ໂຄງການທີ່ບໍ່ມີປະສິດທິຜົນໄປກ່ອນ, ຮັບປະກັນໃຫ້ມີການສະສົມ ດ້ວຍການປະຢັດ, ຮັກສາລາຍຮັບພາຍໃນໄວ້ເພື່ອຮອງຮັບລາຍຈ່າຍທີ່ຈຳເປັນຂອງລັດຖະບານ ແລະ ຊຳລະໜີ້ສິນສາທາລະນະ ເພື່ອຫລຸດຜ່ອນການກູ້ຢືມໃໝ່;

4). ຮັບປະກັນຮັກສາສະຖຽນລະພາບການບໍລິຫານໜີ້ສິນສາທາລະນະ ໃຫ້ສາມາດປະຄັບປະຄອງເພື່ອບໍ່ໃຫ້ປະເທດຕົກຢູ່ໃນປະເທດທີ່ບໍ່ສາມາດຊຳລະໜີ້ສິນໄດ້ ດ້ວຍຮູບການປັບໂຄງສ້າງໜີ້ສິນສາທາລະນະຄືນໃໝ່ ແຕ່ນີ້ຮອດປີ 2027 ແລະ ຫລັງປີ 2027 ຮອດປີ 2035 ໃຫ້ເປັນແຜນລະອຽດ ມີລາຍຮັບຮອງຮັບໃນການຊຳລະໜີ້ສິນ ແຕ່ລະຂໍ້ຜູກພັນສັນຍາ;

5). ຮັບປະກັນສ້າງຖານລາຍຮັບໃໝ່ ເພື່ອເຮັດໃຫ້ລາຍຮັບປົກກະຕິພາຍໃນກຸ່ມລາຍຈ່າຍພາຍໃນ ແລະ ມີສ່ວນທີ່ເຫລືອຈຳນວນໜຶ່ງເພື່ອຮອງຮັບໃຫ້ແກ່ການຊຳລະໜີ້ສິນສາທາລະນະ ດ້ວຍການນຳໃຊ້ກົນໄກຕ່າງໆ ໃນການຂຸດຄົ້ນທ່າແຮງບົ່ມຊ້ອນບາງດ້ານ ເຊັ່ນ: ບັນດາເຂື່ອນໄຟຟ້າ, ໂຄງການແຮ່ທາດ ແລະ ອື່ນໆ;

6). ຮັບປະກັນສ້າງຄວາມເຂັ້ມແຂງທາງດ້ານງົບປະມານຕາມທິດສາມສ້າງ ໂດຍການສ້າງແຂວງໃຫ້ເປັນຫົວໜ່ວຍຍຸດທະສາດທາງດ້ານເງິນ, ເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານທາງດ້ານການເງິນ ແລະ ບ້ານເປັນຫົວໜ່ວຍພັດທະນາທາງດ້ານການເງິນ, ກະຊວງການເງິນ ຈະມອບຫົວໜ່ວຍທຸລະກິດທີ່ຕັ້ງຢູ່ແຂວງຈຳນວນໜຶ່ງ ໃຫ້ແຂວງຮັບຜິດຊອບ ເພື່ອທົດລອງເພີ່ມລາຍຮັບ ຂອງທ້ອງຖິ່ນຂຶ້ນ, ຫລຸດຜ່ອນການດຸ່ນດ່ຽງຂອງສູນກາງລົງ, ກ້າວໄປສູ່ແຂວງກຸ້ມຕົນເອງ ແລະ ເກີນດູນ ຈາກ 3 ແຂວງ (ນະຄອນຫລວງວຽງຈັນ, ແຂວງໄຊສົມບູນ ແລະ ຈຳປາສັກ) ຕື່ມອີກ 5 ແຂວງໃນປີ 2023 (ແຂວງຫລວງພະບາງ, ສະຫວັນນະເຂດ, ຄຳມ່ວນ, ບໍລິຄຳໄຊ ແລະ ອັດຕະປື) ລວມທັງໝົດເປັນ 8 ແຂວງ, ສ່ວນອີກ 10 ແຂວງທີ່ຍັງເຫລືອຈະສືບຕໍ່ຄົ້ນຄວ້າໃນປີຕໍ່ໄປ.

ສ່ວນຄາດໝາຍສູ້ຊົນທາງດ້ານລາຍຮັບງົບປະມານແຫ່ງລັດ ຄາດຄະເນສູ້ຊົນເກັບລາຍຮັບທັງໝົດໃນປີ 2023 ຈຳນວນ 38.448 ຕື້ກີບ ທຽບໃສ່ແຜນຂອງປີຜ່ານມາເພີ່ມຂຶ້ນ 21,70% (ເປັນເງິນ 6.854 ຕື້ກີບ) ຫລື ເທົ່າກັບ 16,42% ຂອງ GDP, ສະເພາະລາຍຮັບພາຍໃນ ຈຳນວນ 34.898 ຕື້ກີບ ທຽບໃສ່ປີ 2022 ເພີ່ມຂຶ້ນ 20,49% (ເປັນເງິນ5.935 ຕື້ກີບ) ຫລື ເທົ່າກັບ 14,90% ຂອງ GDP (ມູນຄ່າ GDP ເທົ່າກັບ 234.160 ຕື້ກີບ) ແລະ ຄາດໝາຍດ້ານລາຍຈ່າຍງົບປະມານແຫ່ງລັດ ຄາດໝາຍເພດານລວມຍອດລາຍຈ່າຍງົບປະມານແຫ່ງລັດທັງໝົດ ຈຳນວນ 43.498 ຕື້ກີບ ຫລື ເທົ່າກັບ 18,58% ຂອງ GDP ໃນນີ້: ລາຍຈ່າຍງົບປະມານປົກກະຕິພາຍໃນ ຈຳນວນ 33.348 ຕື້ກີບ.

# 9ເດືອນຜ່ານມາເສດຖະກິດແຫ່ງຊາດຂະຫຍາຍຕົວຢູ່ໃນລະດັບ 4,2%

ອ່ານຕໍ່ຈາກສະບັບກ່ອນ...

8) ດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການພົວພັນສາກົນ: ໄດ້ສຸມໃສ່ວຽກງານ ປກສ-ປກຊ ທົ່ວປວງຊົນຮອບດ້ານ ອັນໄດ້ເຮັດໃຫ້ປະເທດຊາດພວກເຮົາສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ກໍມີບາດກ້າວທີ່ດີຂຶ້ນ ໂດຍສະເພາະສາມາດມ້າງຄະດີ ແລະ ຈັບກຸມຜູ້ຄ້າລາຍໃຫຍ່, ຜູ້ເສບຢາເສບຕິດໄດ້ຫລາຍກໍລະນີ. ພ້ອມນັ້ນ, ໄດ້ເສີມຂະຫຍາຍການພົວພັນຮ່ວມມືກັບຕ່າງປະເທດ ແລະ ປະເທດເພື່ອນມິດຍຸດທະສາດ ແລະ ພິເສດແມ່ນປະເທດໃກ້ຄຽງດ້ວຍຫລາຍຮູບແບບ ລວມທັງເຂົ້າຮ່ວມກອງປະຊຸມລະດັບສາກົນ ແລະ ພາກພື້ນ ແລະ ການຍາດແຍ່ງການຮ່ວມມືຊ່ວຍເຫລືອຈາກສາກົນ ເຊິ່ງໄດ້ເຮັດໃຫ້ຖານະບົດບາດຂອງປະເທດເຮົາຕໍ່ເວທີສາກົນ ແລະ ພາກພື້ນ ພົ້ນເດັ່ນຂຶ້ນ ແລະ ສ້າງໄດ້ຄວາມໝັ້ນຄົງທາງດ້ານການເມືອງ ແລະ ຄວາມປອດໄພ ຕໍ່ປະເທດຂອງພວກເຮົາ.

9) ການແກ້ໄຂບັນຫາການລະບາດພະຍາດໂຄວິດ-19: ໄດ້ປະຕິບັດມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19 ໄປຄຽງຄູ່ກັບການໂຄສະນາເຜີຍແຜ່ໃຫ້ສັງຄົມຮັບຮູ້ ແລະ ເຂົ້າໃຈ ເຖິງຄວາມສໍາຄັນຂອງການປ້ອງກັນຕົນເອງ, ການກວດຫາເຊື້ອ ແລະ ການປະຕິບັດມາດຕະການຕ່າງໆໃນແຕ່ລະໄລຍະ. ພິເສດ ແມ່ນໄດ້ສຸມໃສ່ລະດົມຂໍການຊ່ວຍເຫລືອວັກຊີນຈາກສາກົນ ແລະ ປະເທດເພື່ອນມິດໄດ້ພຽງພໍ ທັງສຸມໃສ່ສັກວັກຊີນ ບັນລຸໄດ້ຕາມຄາດໝາຍທີ່ວາງໄວ້ ຈຶ່ງເຮັດໃຫ້ສາມາດເປີດປະເທດ ແລະ ຜ່ອນຜັນມາດຕະການຕ່າງໆ ໃຫ້ກັບມາສູ່ສະພາບປົກກະຕິໄດ້ນັບແຕ່ເດືອນພຶດສະພາເປັນຕົ້ນມາ.

10) ການສ້າງວຽກເຮັດງານທໍາ ແລະ ຈັດສັນແຮງງານ: ລັດຖະບານໄດ້ມີຄວາມພະຍາຍາມແກ້ໄຂບັນຫາແຮງງານທີ່ໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ແລະ ແຮງງານລາວທີ່ກັບມາຈາກປະເທດໃກ້ຄຽງໃຫ້ມີຄວາມສະຫງົບເປັນພື້ນຖານ. ພ້ອມກັນນັ້ນ, ກໍໄດ້ເອົາໃຈໃສ່ຂຶ້ນທະບຽນ ແລະ ສ້າງສີມືແຮງງານທີ່ມີຄຸນນະພາບເພື່ອສົ່ງອອກແຮງງານໃຫ້ບາງປະເທດທີ່ມີຄວາມຕ້ອງການ ແລະ ເໝາະສົມກັບສີມືຂອງແຮງງານລາວ (ໃນປີ 2022 ສາມາດສົ່ງອອກແຮງງານໄປຕ່າງປະເທດຈໍານວນ 49.504 ຄົນ).

ສໍາລັບທິດທາງ ແລະ ແຜນວຽກຈຸດສຸມຈໍານວນໜຶ່ງ ທີ່ລັດຖະບານ ຈະສຸມໃສ່ຈັດຕັ້ງປະຕິບັດໃນປີ 2023 ເຊິ່ງເປັນປີກາງສະໄໝຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX (2021-2025) ແລະ ເປັນປີທີ່ຈະມີການປະເມີນຄືນການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ. ລັດຖະບານ ຈຶ່ງສຸມທຸກກໍາລັງແຮງເຂົ້າໃນການຈັດຕັ້ງປະຕິບັດບັນດາຄາດໝາຍທາງດ້ານເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ກໍຄືບັນດາເປົ້າໝາຍຂອງວາລະແຫ່ງຊາດທັງສອງ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນດີກວ່າເກົ່າ; ພ້ອມນັ້ນ, ລັດຖະບານ ຈະຕ້ອງສູ້ຊົນຮັກສາສະຖຽນລະພາບທາງດ້ານເສດຖະກິດ, ການເງິນ-ເງິນຕາ ຂອງປະເທດເຮົາ ບໍ່ໃຫ້ປະເທດຕົກເຂົ້າສູ່ວິກິດ ແລະ ທັງຄ່ອຍໆກ້າວໄປເຖິງການສ້າງພື້ນຖານໃຫ້ເສດຖະກິດ-ການເງິນ ພົ້ນຈາກຄວາມສ່ຽງ ແລະ ມີຄວາມໝັ້ນທ່ຽງເປັນກ້າວໆໃນປີຕໍ່ໆໄປ ເຊິ່ງບາງວຽກຈຸດສຸມທີ່ຈະຕ້ອງໄດ້ສຸມໃສ່ໃນປີ 2023 ມີດັ່ງນີ້:

1) ພາຍຫລັງທີ່ກອງປະຊຸມເທື່ອທີ 4 ສະພາແຫ່ງຊາດ ຊຸດທີ IX ນີ້ໄດ້ຮັບຮອງເອົາບັນດາຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ຕິດພັນກັບ 2 ວາລະແຫ່ງຊາດ ແລ້ວ, ລັດຖະບານຈະຮີບຮ້ອນນໍາໄປຈັດຕັ້ງຜັນຂະຫຍາຍ ໂດຍຈະໄດ້ກໍານົດເປັນໜ້າວຽກລະອຽດ ແລະ ແບ່ງຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ, ທັງກໍານົດຄາດໝາຍທາງດ້ານເວລາໃນການຈັດຕັ້ງປະຕິບັດໃຫ້ລະອຽດ. ພິເສດ ອັນຮີບດ່ວນທີ່ສຸດແມ່ນລັດຖະບານ ຈະຈັດກອງປະຊຸມວຽກງານແຜນການ-ການເງິນທົ່ວປະເທດ ພາຍຫລັງສະພາແຫ່ງຊາດ ອອກມະຕິ ວ່າດ້ວຍການຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນເງິນຕາ.

2) ເລັ່ງແກ້ໄຂສະພາບຄວາມບອບບາງດ້ານເສດຖະກິດມະຫາພາກໃຫ້ກັບສູ່ສະພາບປົກກະຕິໂດຍໄວ, ໃນນີ້ຈະໄດ້ສຸມໃສ່ເປັນພິເສດແມ່ນ:

- ສຸມໃສ່ການເກັບລາຍຮັບໃຫ້ໄດ້ຕາມແຜນການ ຫລື ໃຫ້ເກີນແຜນເປັນປີທີ 3 ຕິດຕໍ່ກັນ ເພື່ອມີເງິນມາແກ້ໄຂບັນຫາ, ໃນນັ້ນ ຈະໄດ້ສຸມໃສ່ຊຸກຍູ້ໃຫ້ມີຖານລາຍຮັບໃໝ່ ແລະ ຍູ້ແຮງການຫັນການເກັບລາຍຮັບເປັນທັນສະໄໝໃຫ້ແຂງແຮງ ແລະ ປາກົດຜົນເປັນຈິງຫລາຍກວ່າເກົ່າ; ສືບຕໍ່ປະຕິບັດບັນດານິຕິກໍາທີ່ລັດຖະບານວາງອອກ ທີ່ກ່ຽວກັບການເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫລຂອງລາຍຮັບງົບປະມານລັດ, ການປະຢັດ ແລະ ຕ້ານການຟຸມເຟືອຍ, ການນໍາໃຊ້ລົດຂອງລັດ ແລະ ອື່ນໆ ໃຫ້ເຂັ້ມງວດ ແລະ ເປັນຮູບປະທໍາຫລາຍຂຶ້ນ.

- ສືບຕໍ່ແກ້ໄຂໜີ້ສິນສາທາລະນະ ໂດຍສະເພາະໜີ້ສິນຕໍ່ຕ່າງປະເທດ, ບໍ່ໃຫ້ຕົກເຂົ້າສູ່ສະພາບທີ່ບໍ່ສາມາດຊໍາລະໜີ້ໄດ້. ພ້ອມກັນນັ້ນ ກໍຄົ້ນຄວ້າ ແລະ ຈັດສັນແຫລ່ງທຶນເພື່ອມາແກ້ໄຂໜີ້ສິນການລົງທຶນຂອງລັດເພື່ອຊ່ວຍຜູ້ຮັບເໝົາໂຄງການສາມາດສືບຕໍ່ດໍາເນີນທຸລະກິດໄດ້. ນອກນັ້ນ, ກໍຈະໄດ້ສືບຕໍ່ສຸມໃສ່ປັບປຸງປະສິດທິຜົນຂອງການລົງທຶນຂອງລັດໃຫ້ດີຂຶ້ນ, ຢຸດການຈັດສັນທຶນໃສ່ໂຄງການໃໝ່ທີ່ບໍ່ມີປະສິດທິຜົນ ແລະ ສຸມໃສ່ໂຄງການລົງທຶນເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນ ເປັນບູລິມະສິດ.

- ສືບຕໍ່ເອົາໃຈໃສ່ເປັນພິເສດຕໍ່ການຄຸ້ມຄອງອັດຕາແລກປ່ຽນເງິນຕາ, ລາຄາສິນຄ້າ, ປະລິມານເງິນ M2 ແລະອັດຕາເງິນເຟີ້ ໃຫ້ຢູ່ໃນລະດັບທີ່ສາມາດຄວບຄຸມໄດ້. ພ້ອມກັນນັ້ນ, ຈະສືບຕໍ່ສຸມໃສ່ແກ້ໄຂບັນຫາການສະໜອງນໍ້າມັນເຊື້ອໄຟໃຫ້ເປັນປົກກະຕິດ້ວຍການນໍາໃຊ້ມາດຕະການຕ່າງໆ ໂດຍຖືເອົາມາດຕະການເສດຖະກິດ ແລະ ຕາມກົນໄກຕະຫລາດເປັນຕົ້ນຕໍ ໄປຄຽງຄູ່ກັບການສ້າງມາດຕະການແກ້ໄຂໃນໄລຍະກາງ ແລະ ຍາວ.

3) ສືບຕໍ່ປະຕິຮູບລັດວິສາຫະກິດ ໃຫ້ມີປະສິດທິຜົນທາງດ້ານເສດຖະກິດ ໃຫ້ເປັນຮູບປະທໍາຫລາຍຂຶ້ນໂດຍສະເພາະຫົວໜ່ວຍລັດວິສາຫະກິດທີ່ໄດ້ກໍານົດໃນແຜນຂອງການປະຕິຮູບຂອງລັດຖະບານ. ພ້ອມກັນນັ້ນ, ກໍສືບຕໍ່ປັບປຸງແກ້ໄຂໂຄງສ້າງໜີ້ສິນຂອງລັດວິສາຫະກິດໂດຍໄວ ດ້ວຍຫລາຍຮູບແບບ ລວມທັງການເຈລະຈາເລື່ອນການຊໍາລະຕົ້ນທຶນ ແລະ ດອກເບ້ຍ, ຊອກຫາແຫລ່ງກູ້ຢືມທີ່ມີດອກເບ້ຍຕໍ່າ, ຫລຸດການສ້າງໜີ້ໃໝ່ທີ່ບໍ່ຈໍາເປັນ ແລະ ອື່ນໆ.

4) ສືບຕໍ່ເລັ່ງປັບປຸງກົນໄກອໍານວຍຄວາມສະດວກໃນການດໍາເນີນທຸລະກິດ ແລະ ສົ່ງເສີມການລົງທຶນໃຫ້ດີຂຶ້ນໂດຍລັດຖະບານຈະກໍານົດໜ້າວຽກທີ່ຈະປັບປຸງ ແລະ ແບ່ງຄວາມຮັບຜິດຊອບໃນການປັບປຸງໃຫ້ລະອຽດ; ນອກນັ້ນ, ຈະສືບຕໍ່ເລັ່ງຊຸກຍູ້ ແລະ ສົ່ງເສີມບັນດາໂຄງການລົງທຶນຂອງຕ່າງປະເທດທີ່ໄດ້ອະນຸມັດແລ້ວໃຫມີຄວາມຄືບໜ້າ ແລະ ມີຜົນໄດ້ຮັບຕົວຈິງຕາມແຜນທີ່ວາງໄວ້.

5) ຄົ້ນຄວ້າ ແລະ ຈັດສັນແຫລ່ງທຶນ ເພື່ອສົ່ງເສີມໃຫ້ຜູ້ປະກອບການທີ່ຜະລິດ ແລະ ປຸງແຕ່ງກະສິກໍາເປັນສິນຄ້າເພື່ອສົ່ງອອກ ໂດຍມີເງື່ອນໄຂທີ່ລະອຽດ, ຮັດກຸມ ແລະ ໂປ່ງໃສ່ເພື່ອໃຫ້ການປະຕິບັດນະໂຍບາຍດັ່ງກ່າວ ມີຈຸດສຸມ ແລະ ຖືກເປົ້າໝາຍ.

# ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ

ອ່ານຕໍ່ຈາກສະບັບກ່ອນ...

2). ວຽກງານສາທາລະນະສຸກ (ມີທັງໝົດ 11 ຕົວຊີ້ບອກ): ມີ 7 ຕົວຊີ້ບອກຄາດວ່າຈະບັນລຸຕາມແຜນ, ໃນນີ້ອັນທີ່ພົ້ນເດັ່ນແມ່ນການສັກວັກຊີນປ້ອງກັນພະຍາດໂຄວິດ-19 ໃນເຂັມທີ 1 ກວມເອົາ 80,8% ຂອງປະຊາກອນທັງໝົດ ແລະ ເຂັມທີ 2 ກວມເອົາ 72%, ເຂັມທີ 3 ກວມເອົາ 25,7% ແລະ ເຂັມທີ 4 ກວມເອົາ 3,9% ແລະ ຄາດວ່າໝົດປີ ເຂັມທີ 1 ຈະບັນລຸໄດ້ 86,5% ແລະ ເຂັມທີ 2 ກວມເອົາ 77%, ເຂັ້ມທີ 3 ກວມເອົາ 31,8% ແລະ ເຂັມທີ 4 ກວມເອົາ 7,4%, ເຖິງຢ່າງໃດກໍຕາມ ມີ 4 ຕົວຊີ້ບອກແມ່ນມີຄວາມທ້າທາຍທີ່ຈະບໍ່ບັນລຸຕາມແຜນເປັນຕົ້ນແມ່ນ: ອັດຕາສ່ວນເດັກນ້ອຍລຸ່ມ 5 ປີ ທີ່ມີນໍ້າໜັກຕໍ່າກວ່າມາດຕະຖານ, ອັດຕາສ່ວນເດັກນ້ອຍລຸ່ມ 5 ປີທີ່ມີລວງສູງຕໍ່າກວ່າມາດຕະຖານ, ອັດຕາການເກີດລູກມີແພດຊ່ວຍ. ເຖິງຢ່າງໃດກໍຕາມ, ການເຂົ້າເຖິງການບໍລິການດ້ານສາທາລະນະສຸກ, ການສັກຢາ ແລະ ສຸຂະນາໄມ ໂດຍສະເພາະຢູ່ໃນເຂດພູດອຍ ແລະ ຫ່າງໄກສອກຫລີກຍັງມີອັດຕາສ່ວນຕໍ່າ ແລະ ອື່ນໆ.

3). ວຽກງານຖະແຫລງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ (ມີ 12 ຕົວຊີ້ບອກ): ເຊິ່ງມີ 9 ຕົວຊີ້ບອກຄາດວ່າຈະສາມາດບັນລຸໄດ້ຕາມແຜນ ແລະ ມີ 3 ຕົວຊີ້ບອກ ຄາດວ່າຈະບໍ່ສາມາດບັນລຸໄດ້ຕາມແຜນ, ສາເຫດແມ່ນຍ້ອນການຕອບສະໜອງທາງດ້ານທຶນຮອນບໍ່ໄດ້ຕາມຄວາມຕ້ອງການ ແລະ ທ່ວງທັນກັບເວລາ ທັງໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19.

4). ວຽກງານແຮງງານ ແລະ ສະຫວັດດີການສັງຄົມ (ມີ 9 ຕົວຊີ້ບອກ) ມີ 7 ຕົວຊີ້ບອກ ຄາດວ່າສາມາດບັນລຸໄດ້ຕາມແຜນການ ແລະ ມີ 2 ຕົວຊີ້ບອກ ຄາດວ່າຈະບໍ່ສາມາດບັນລຸໄດ້ຕາມແຜນການ ເຊັ່ນ: ການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ຄຸນງາມຄວາມດີ ໃນພາລະກິດປະຕິວັດຊາດ ແລະ ການເກັບກູ້ລະເບີດບໍ່ທັນແຕກ ຍ້ອນການຕອບສະໜອງງົບປະມານບໍ່ພຽງພໍກັບຄວາມຕ້ອງການ ກໍຄືແຜນທີ່ໄດ້ກໍານົດໄວ້.

3. ເປົ້າໝາຍຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນເທື່ອລະກ້າວ (ມີ 8 ຕົວຊີ້ບອກ) ມີ 6 ຕົວຊີ້ບອກຄາດວ່າຈະສາມາດບັນລຸໄດ້ຕາມແຜນ ແລະ ມີ 2 ຕົວຊີ້ບອກຄາດວ່າຈະບໍ່ສາມາດບັນລຸແຜນ. ສາເຫດແມ່ນເນື່ອງຈາກຄວາມເປັນເຈົ້າການ ແລະ ຄວາມຕື່ນຕົວຂອງປະຊາຊົນຢູ່ບາງບໍລິເວນຍັງບໍ່ທັນສູງ ບວກກັບງົບປະມານ ເພື່ອປະຕິບັດວຽກດັ່ງກ່າວ ບໍ່ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການ,

4. ເປົ້າໝາຍປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມສົມດຸນ ແລະ ຫລຸດຜ່ອນຄວາມສ່ຽງຈາກໄພພິບັດມີທັງໝົດ 8 ຕົວຊີ້ບອກ, ໃນນີ້ ມີ 6 ຕົວຊີ້ບອກສາມາດບັນລຸຕາມແຜນກໍານົດໄວ້ ແລະ ມີ 2 ຕົວຊີ້ບອກຍັງພົບຄວາມຫຍຸ້ງຍາກຄາດວ່າຈະບໍ່ສາມາດບັນລຸໄດ້ຕາມແຜນ ຄື: ການຂຶ້ນທະບຽນ-ອອກໃບຕາດິນໃນຂອບເຂດທົ່ວປະເທດ, ການສ້າງແຜນອ່າງຮັບນໍ້າຫລັກຂອງແຕ່ລະທ້ອງຖິ່ນ ໃນຂອບເຂດທົ່ວປະເທດ. ສາເຫດແມ່ນຍ້ອນໄດ້ຮັບຜົນກະທົບຈາກການລະບາດໂຄວິດ-19 ເຮັດໃຫ້ບາງກິດຈະກໍາບໍ່ສາມາດປະຕິບັດໄດ້ ແລະ ການສະໜອງທຶນຮອນລວມທັງຈາກງົບປະມານລັດ ແລະ ຈາກການຊ່ວຍເຫລືອຈາກອົງການຈັດຕັ້ງສາກົນກ່ຽວຂ້ອງ ມີຄວາມຊັກຊ້າ.

5. ເປົ້າໝາຍການສ້າງໂຄງລ່າງພື້ນຖານທີ່ມີຄວາມເຂັ້ມແຂງ, ນໍາໃຊ້ທ່າແຮງ, ກາລະໂອກາດທີ່ຕັ້ງ, ການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ຢ່າງເປັນເຈົ້າການ.

1). ວຽກງານໂຍທາທິການ ແລະ ຂົນສົ່ງ ໄດ້ພະຍາຍາມຍົກລະດັບເສັ້ນທາງຫລວງແຫ່ງຊາດຕາມຄວາມສາມາດຕົວຈິງ ເປັນຕົ້ນ ບາງຊ່ວງຂອງເລກທີ 13 ເໜືອ ແລະ ໃຕ້; ສືບຕໍ່ກໍ່ສ້າງສະໜາມບິນສາກົນບໍ່ແກ້ວ ແລະ ໜອງຄ້າງ ຕາມແຜນໂຄງການ ແລະ ມີຄວາມຄືບໜ້າດີ, ໄດ້ສືບຕໍ່ສຸມໃສ່ພັດທະນາເຂດໂລຈິສຕິກ ແລະ ສາມາດເປີດການນໍາໃຊ້ແລ້ວ 3 ທ່າບົກ ຄື: ສະຫວັນນະເຂດ, ຈໍາປາສັກ ແລະ ທ່ານາແລ້ງ, ພ້ອມນີ້ພວມສຸມໃສ່ພັດທະນາທ່າບົກຢູ່ບາງແຫ່ງຕື່ມອີກ, ແຕ່ກໍເຫັນວ່າເສັ້ນທາງຄົມມະນາຄົມທາງບົກຢູ່ຫລາຍບໍລິເວນບໍ່ສາມາດນໍາໃຊ້ໄດ້ສະດວກຍ້ອນໄດ້ຮັບຜົນກະທົບຈາກໄພພິບັດທາງທໍາມະຊາດ ແລະ ນໍາໃຊ້ມາຫລາຍປີ ແລະ ທຶນຮອນໃນການມາບູລະນະບໍ່ພຽງພໍ.

2). ວຽກງານເຕັກໂນໂລຊີ ແລະ ການສື່ສານ ໄດ້ສືບຕໍ່ຂະຫຍາຍໂທລະສັບຕັ້ງໂຕະ ແລະ ໂທລະສັບມືຖື 302.981 ເລກໝາຍ (98% ຂອງແຜນການ) ແລະ ໄດ້ລົງທະບຽນນໍາໃຊ້ອິນເຕີເນັດໄດ້ຕື່ມອີກ850.990 ບັນຊີ (112% ຂອງແຜນການ). ນອກນັ້ນ, ຍັງສຸມໃສ່ພັດທະນາດ້ານການບໍລິຫານລັດແບບອີເລັກໂຕຣນິກລວມທັງການຫັນລະບົບຄຸ້ມຄອງລາຍຮັບເປັນທັນສະໄໝ ເຊິ່ງກໍໄດ້ຮັບຜົນໃນເບື້ອງຕົ້ນຢູ່ບາງຂັ້ນ, ແຕ່ການຫັນເປັນທັນສະໄໝໃນການປະຕິບັດໜ້າທີ່ຢູ່ຫລາຍພາກສ່ວນບໍ່ສາມາດບັນລຸໄດ້ຕາມຄາດໝາຍທີ່ວາງໄວ້ ຍ້ອນທຶນຮອນ ແລະ ຄວາມເປັນເຈົ້າການຂອງພາກສ່ວນຕ່າງໆຍັງບໍ່ທັນສູງ.

3). ວຽກງານພົວພັນຮ່ວມມືກັບຕ່າງປະເທດ: ໄດ້ສືບຕໍ່ດໍາເນີນຕາມແນວທາງຂອງພັກ ແລະ ແຜນການປີທີ່ໄດ້ກໍານົດໄວ້ ດ້ວຍວິທີ ແລະ ຮູບແບບຕ່າງໆຢ່າງເປັນປົກກະຕິ. ອັນພິເສດ ການນໍາພັກ-ລັດຂັ້ນຕ່າງໆໄດ້ສືບຕໍ່ພົບປະແລກປ່ຽນບົດຮຽນກັບປະເທດຕ່າງໆລວມທັງເພື່ອນມິດຍຸດທະສາດຢ່າງເປັນປົກກະຕິດ້ວຍວິທີການ ແລະຮູບການຕ່າງໆທີ່ສອດຄ່ອງ, ອັນພົ້ນເດັ່ນແມ່ນຂະບວນການກະກຽມ ແລະ ຈັດຕັ້ງງານສະເຫລີມສະຫລອງ 2 ວັນປະຫວັດສາດ ລາວ-ຫວຽດນາມ ແມ່ນໄດ້ດໍາເນີນຢ່າງຟົດຟື້ນ ແລະ ມີຜົນສໍາເລັດອັນຈົບງາມ.

6. ເປົ້າໝາຍການຄຸ້ມຄອງ-ບໍລິຫານລັດມີປະສິດທິພາບ, ສັງຄົມມີຄວາມສະເໝີພາບ, ຍຸຕິທໍາ ແລະ ໄດ້ຮັບການປົກປ້ອງຕາມທິດການປົກຄອງດ້ວຍກົດໝາຍທີ່ສັກສິດ ແລະ ເຂັ້ມງວດ

1). ໄດ້ສໍາເລັດການຄົ້ນຄວ້າພາລະບົດບາດ ຕິດພັນກັບການປັບປຸງກົງຈັກ ຈໍານວນ 2 ກະຊວງ ແລະ ອົງການທຽບເທົ່າ ເຊິ່ງສາມາດຫລຸດຜ່ອນກົງຈັກຂັ້ນກົມລົງ 34 ກົມທຽບເທົ່າກົມ ແລະ ຮັບຮອງຜົນການກໍານົດຕໍາແໜ່ງງານຈໍານວນ 4 ກົມກອງ, ຄົ້ນຄວ້າສັບຊ້ອນບຸກຄະລາກອນໃນແຕ່ລະຂັ້ນ ໄປຕາມທິດຫັນເປັນມືອາຊີບຫລາຍຂຶ້ນ.

2). ໄດ້ເກັບກໍາຂໍ້ມູນຈໍານວນຫົວໜ່ວຍວິຊາການທີ່ມີລາຍຮັບທາງດ້ານການເງິນ ເພື່ອສຶກສາຄວາມເປັນໄປໄດ້ໃນການຫັນໄປກຸ້ມຕົນເອງທາງດ້ານງົບປະມານ ຈໍານວນ 17 ພາກສ່ວນ (ປັດຈຸບັນສາມາດເກັບກໍາຂໍ້ມູນໄດ້ 14 ພາກສ່ວນ) ແລະ ເຫັນວ່າ 53 ຫົວໜ່ວຍວິຊາການ ມີເງື່ອນໄຂກຸ້ມຕົນເອງດ້ານງົບປະມານ,

3). ໄດ້ພະຍາຍາມສຸມໃສ່ປັບປຸງສະພາບແວດລ້ອມ ແລະ ກົນໄກການບໍລິການການລົງທຶນ ຕາມຄໍາສັ່ງເລກທີ 02/ນຍ ແລະ ຄໍາສັ່ງເລກທີ 03/ນຍໃຫ້ສອດຄ່ອງກວ່າເກົ່າຫລາຍຂຶ້ນ.

4). ໄດ້ເອົາໃຈໃສ່ປັບປຸງວຽກງານຍຸຕິທໍາ ໃຫ້ຢ່າງຕັ້ງໜ້າ ໃນນີ້ລວມທັງການປັບປຸງກົດໝາຍ ແລະ ນິຕິກໍາລຸ່ມກົດໝາຍ ທີ່ພົວພັນເຖິງການຄຸ້ມຄອງເສດຖະກິດ-ສັງຄົມ ເຮັດໃຫ້ການພັດທະນາເສດຖະກິດ-ສັງຄົມຕິດພັນກັບການປະຕິບັດວາລະແຫ່ງຊາດດໍາເນີນໄປໃນລະດັບດີພໍສົມຄວນທັງ

5). ໄດ້ເອົາໃຈໃສ່ປະສານສົມທົບກັບອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນທຸກຂັ້ນ ທັງສ້າງເງື່ອນໄຂໃຫ້ອົງການດັ່ງກ່າວສາມາດຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຕາມແຜນງານ ແລະ ໂຄງການຂອງແຕ່ລະອົງການໄດ້ກໍານົດ.

6). ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄດ້ສືບຕໍ່ຈັດຕັ້ງປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານຂອງພັກ ຢ່າງຕັ້ງໜ້າ ດ້ວຍມາດຕະການຕ່າງໆຢ່າງເປັນປົກກະຕິ ທັງຢູ່ເຂດຈຸດສຸມ ແລະ ເຂດທົ່ວໄປ ຕາມແຜນງານ ແລະ ໂຄງການທີ່ໄດ້ກໍານົດໄວ້, ໃນນີ້ລວມທັງການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຕາມ 6 ຈຸດສຸມທີ່ໄດ້ກໍານົດໄວ້ ແລະ ເຫັນວ່າໄດ້ຮັບຜົນດີສົມຄວນ ເຊິ່ງເຮັດໃຫ້ປະເທດຊາດສືບຕໍ່ມີຄວາມສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ.

ສໍາລັບທິດທາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈໍາປີ 2023 ສະພາບການຂອງໂລກ ແລະ ພາກພື້ນ ຍັງຈະສືບຕໍ່ຜັນແປທີ່ຄາດເດົາໄດ້ຍາກ, ບວກກັບສະພາບເສດຖະກິດ-ການເງິນຂອງປະເທດເຮົາຍັງສືບຕໍ່ພົບຄວາມຫຍຸ້ງຍາກພໍສົມຄວນ. ໃນສະພາບການດັ່ງກ່າວ, ເພື່ອສືບຕໍ່ປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ແລະ ວາລະແຫ່ງຊາດ. ສະນັ້ນ, ທິດທາງ, ຄາດໝາຍລວມ ແລະ ວຽກງານຈຸດສຸມ ໃນປີ 2023 ເຊິ່ງມີທິດທາງລວມດັ່ງນີ້:

1). ຮັບປະກັນໃຫ້ປະເທດຊາດສືບຕໍ່ມີຄວາມສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍທີ່ໜັກແໜ້ນ.

2). ຄຸ້ມຄອງເສດຖະກິດມະຫາພາກໃຫ້ໄປຕາມທິດທີ່ແຜນການ 5 ປີ ໄດ້ກໍານົດໄວ້.

3). ຍູ້ແຮງດ້ານເສດຖະກິດໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ໝັ້ນທ່ຽງ.

4). ພັດທະນາຊັບພະຍາກອນມະນຸດຢ່າງຕັ້ງໜ້າ ໂດຍເນັ້ນຄຸນນະພາບເປັນຕົ້ນຕໍ.

5). ສຸມໃສ່ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ຕິດພັນກັບວຽກງານ 3 ສ້າງ ໃຫ້ແຂງແຮງ ແລະ ມີຈຸດສຸມກວ່າເກົ່າ.

6). ປົກປັກຮັກສາ ແລະ ນໍາໃຊ້ຊັບພະຍາກອນທໍາມະຊາດຕາມທິດຍືນຍົງຕິດພັນກັບການຟື້ນຟູຜົນກະທົບຈາກໄພພິບັດທໍາມະຊາດ ຕາມຄວາມສາມາດຕົວຈິງ.

7). ປັບປຸງການຄຸ້ມຄອງບໍລິຫານລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຕາມລະບຽບກົດໝາຍທີ່ເຂັ້ມງວດກວ່າເກົ່າ ແລະ ຮັບປະກັນທາງດ້ານປະສິດທິພາບ ແລະ ປະສິດທິຜົນ.

8). ເພີ່ມທະວີການພົວພັນຮ່ວມມືກັບບັນດາປະເທດເພື່ອນມິດ ແລະ ຄູ່ຮ່ວມພັດທະນາດ້ວຍການສ້າງສະພາບແວດລ້ອມທີ່ເອື້ອອໍານວຍໃຫ້ແກ່ການເຊື່ອມໂຍງ-ເຊື່ອມຈອດຕາມທິດທີ່ກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ ກໍານົດໄວ້.

# ເຊັນບົດບັນທຶກຮ່ວມວ່າດ້ວຍການປະສານງານກັບບັນດາພະແນກການທີ່ກ່ຽວຂ້ອງຂອງແຂວງ



(ສພຊ) ຕອນແລງວັນທີ 29 ພະຈິກ 2022 ຄະນະກຳມະການວັດທະນາທຳ-ສັງຄົມ ແລະ ບັນດາເຜົ່າຂອງສະພາປະຊາຊົນແຂວງຫລວງນ້ຳທາ ໄດ້ຈັດພິທີເຊັນບົດບັນທຶກຮ່ວມວ່າດ້ວຍການປະສານງານ ລະຫວ່າງຄະນະກຳມະການວັດທະນາທຳ-ສັງຄົມ ແລະ ບັນດາເຜົ່າ ກັບບັນດາພະແນກການທີ່ກ່ຽວຂ້ອງຂອງແຂວງ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ພາຍໃຕ້ການເປັນປະທານຂອງທ່ານ ນາງ ເກສອນ ແສງຍະວົງ ປະທານຄະນະກຳມະການວັດທະນາທຳ-ສັງຄົມ ແລະ ບັນດາເຜົ່າ; ເຂົ້າຮ່ວມມີທ່ານ ນາງ ອຸ່ນຫລ້າ ອ້ຽງລໍລາດ ຮອງປະທານສະພາປະຊາຊົນແຂວງ, ຜູ້ຊີ້ນຳວຽກງານຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ມີສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການທີ່ກ່ຽວຂ້ອງຂອງແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານວິຊາການເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີໄດ້ຮັບຟັງຂໍ້ຕົກລົງຂອງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການອະນຸມັດເປີດພິທີເຊັນບົດບັນທຶກຮ່ວມວ່າດ້ວຍການປະສານງານ ກັບບັນດາພະແນກການທີ່ກ່ຽວຂ້ອງຂອງແຂວງ ເລກທີ 86/ຄລຂ.ສພຂ, ລົງວັນທີ 28 ພະຈິກ 2022 ແລະ ຮ່າງບົດບັນທຶກຮ່ວມວ່າດ້ວຍການປະສານງານ ລະຫວ່າງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ກັບພະແນກສຶກສາ ແລະ ກິລາ, ພະແນກສາທາລະນະສຸກ, ພະແນກຖະແຫລງຂ່າວ ວັດທະນາທຳ ແລະ ທ່ອງທ່ຽວ, ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແລະ ອົງການກາແດງແຂວງຫລວງນ້ຳທາ ມີທັງໝົດ 12 ມາດຕາ; ຮ່າງບົດບັນທຶກຮ່ວມ ວ່າດ້ວຍການພົວພັນ ແລະ ການປະສານງານລະຫວ່າງຄະນະກຳມະການວັດທະນາທຳ-ສັງຄົມ ແລະ ບັນດາເຜົ່າ ກັບອົງການແນວລາວສ້າງຊາດ, ບັນດາອົງການຈັດຕັ້ງມະຫາຊົນ, ພະແນກພາຍໃນ ແລະ ພະແນກກະສິກຳ ແລະ ປ່າໄມ້ແຂວງ (ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ) ທັງໝົດ 12 ມາດຕາ ເຊິ່ງຄະນະກຳມະການວັດທະນາທຳ-ສັງຄົມ ແລະ ບັນດາເຜົ່າ ກັບບັນດາພະແນກການທີ່ກ່ຽວຂ້ອງຂອງແຂວງ ໄດ້ຮ່ວມເຊັນບົດບັນທຶກຢ່າງເປັນທາງການ.

ທັງນີ້, ເພື່ອຮັບປະກັນໃຫ້ແກ່ການປະສານງານ ລະຫວ່າງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ກັບບັນດາພະແນກການທີ່ກ່ຽວຂ້ອງຂອງແຂວງ ເຂົ້າສູ່ລະບຽບຫລັກການ ທັງຮັບປະກັນປະສິດທິຜົນໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ.

ຕອນທ້າຍພິທີ, ຍັງໄດ້ຮັບຟັງຄຳເຫັນໂອ້ລົມຂອງທ່ານ ນາງ ອຸ່ນຫລ້າ ອ້ຽງລໍລາດ ໄດ້ເຫັນດີເປັນເອກະພາບຕໍ່ບົດບັນທຶກຮ່ວມທັງ 2 ສະບັບ ແມ່ນມີຄວາມໝາຍສຳຄັນຫລາຍ ເພາະເປັນຂອດການປະສານງານຂອງຄະນະກຳມະການ ກັບພະແນກການຂອງແຂວງ, ທັງໄດ້ເນັ້ນໜັກໃຫ້ຄະນະກຳມະການ ແລະ ບັນດາພະແນກການໃນການຈັດຕັ້ງປະຕິບັດວຽກງານຕ້ອງປະຕິບັດຕາມກົດໝາຍ, ລະບຽບການຂອງແຕ່ລະພາກສ່ວນໃຫ້ເຂັ້ມງວດ, ການເຄື່ອນໄຫວວຽກງານຕ້ອງເຄື່ອນໄຫວຕາມສິດ, ໜ້າທີ່ຂອງຕົນ, ການພົວພັນປະສານງານຕ້ອງປະຕິບັດຕາມບົດບັນທຶກສະບັບນີ້ ແລະ ຕ້ອງມີແຜນຄົ້ນຄວ້າ, ສ້າງນິຕິກຳໃຕ້ກົດໝາຍທີ່ຈຳເປັນໃນຂົງເຂດຂອງຕົນໃຫ້ໄດ້ຕາມຄາດໝາຍ ພ້ອມທັງຮຽກຮ້ອງໃຫ້ບັນດາພະແນກການທີ່ກ່ຽວຂ້ອງຂອງແຂວງນຳເອົາເນື້ອໃນຈິດໃຈພິທີຄັ້ງນີ້ ໄປຜັນຂະຫຍາຍໃນຂົງເຂດຂອງຕົນ ພ້ອມກັນຈັດຕັ້ງປະຕິບັດວຽກງານໃຫ້ສຳເລັດເປັນກ້າວໆ.

(ນາງ ວັນນີ ແຝງບົວວັນ)

# ຊົມເຊີຍວັນຊາດ 2 ທັນວາ ຄົບຮອບ 47 ປີ ຢ່າງສຸດໃຈ




ເນື່ອງໃນໂອກາດວັນຊາດທີ 2 ທັນວາ ຄົບຮອບ 47 (2/12/1975-2/12/2022) ທ່ານ ສີເຮັງ ທອມສົມບັດ ປະທານສະພາປະຊາຊົນແຂວງສາລະວັນ ໄດ້ມີຄຳເຫັນວ່າ: ຂ້າພະເຈົ້າມີຄວາມຮູ້ສຶກພາກພູມໃຈເປັນຢ່າງຍິ່ງ ທີ່ວັນຊາດທີ 2 ທັນວາ ໄດ້ໝູນວຽນມາບັນຈົບຄົບຮອບ 47 ປີ ເຊິ່ງແມ່ນວັນທີ່ມີຄວາມໝາຍຄວາມສຳຄັນສຳລັບທົ່ວພັກ, ທົ່ວລັດ, ທົ່ວກອງທັບ ແລະ ທົ່ວປວງຊົນລາວບັນດາເຜົ່າ, ແມ່ນວັນແຫ່ງໄຊຊະນະອັນຍິ່ງໃຫຍ່ໃນປະຫວັດສາດແຫ່ງການຕໍ່ສູ້ນັບພັນປີຂອງຊາດລາວເຮົາ, ແມ່ນວັນທີ່ປະຊາຊົນລາວບັນດາເຜົ່າໄດ້ມີອິດສະຫລະພາບ ແລະ ໄດ້ເປັນເຈົ້າຂອງປະເທດຊາດຢ່າງແທ້ຈິງ, ແມ່ນວັນທີ່ປະເທດລາວໄດ້ມີເອກະລາດຢ່າງສົມບູນ ແລະ ມີອະທິປະໄຕຢ່າງຄົບຖ້ວນ, ມີທີ່ຕັ້ງອັນສົມກຽດ ແລະ ມີຖານະເທົ່າທຽມກັບປະເທດອື່ນໆ ໃນເວທີພາກພື້ນ ແລະ ໃນໂລກ.

ວັນທີ 2 ທັນວາ ຍັງແມ່ນວັນແຫ່ງສັນຕິພາບ, ວັນແຫ່ງການກ້າວສູ່ຍຸກສະໄໝໃໝ່ແຫ່ງການສ້າງປະເທດລາວສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ.

ປະທານ ໄກສອນ ພົມວິຫານ ຜູ້ນຳທີ່ແສນເຄົາລົບຮັກຂອງປະຊາຊົນລາວບັນດາເຜົ່າ ໄດ້ຕີລາຄາວັນທີ 2 ທັນວາ 1975 ວ່າ: “ບໍ່ທັນມີເວລາໃດທີ່ປະຊາຊົນລາວເຮົາ ເຊິ່ງເປັນຜູ້ສ້າງປະຫວັດສາດຂອງຊາດ ນັ້ນໄດ້ຍາດເອົາໄຊຊະນະຢ່າງສົມບູນ, ເຖິງຖອງ ແລະ ບໍລິບູນໄດ້ຢ່າງສະຫງ່າລາສີດີແນວນີ້ຈັກເທື່ອ. ໄຊຊະນະນີ້ ບໍ່ສະເພາະແຕ່ໄດ້ຟື້ນຟູຄວາມເປັນເອກະລາດຂອງປະເທດລາວເຮົາເທົ່ານັ້ນ, ແຕ່ຫາກຍັງເປັນຄັ້ງທຳອິດທີ່ປະຊາຊົນລາວບັນດາເຜົ່າຜູ້ທີ່ເຄີຍດຳລົງຊີວິດເປັນທາດໄດ້ກາຍມາເປັນເຈົ້າຂອງປະເທດຊາດຢ່າງແທ້ຈິງ, ເປັນຊາດໜຶ່ງທີ່ມີເອກະລາດ, ມີອິດສະຫລະພາບຢ່າງສົມບູນ ແລະ ພວມກ້າວຂຶ້ນສັງຄົມນິຍົມ ເຮັດໃຫ້ຄວາມມຸ່ງຫວັງອັນແຮງກ້າຂອງປວງຊົນລາວທັງຊາດ ກໍຄືຂອງມວນມະນຸດປະກົດເປັນຈິງຢູ່ບົນຜືນແຜ່ນດິນອັນແສນຮັກຂອງພວກເຮົາ”.

ເວົ້າສະເພາະ ແຂວງສາລະວັນແລ້ວ ໃນຕະຫລອດ 47 ປີຜ່ານມາ, ພາຍໃຕ້ການນຳພາຂອງພັກ, ອົງຄະນະພັກທຸກຂັ້ນໄດ້ເຮັດໃຫ້ແຂວງມີສະຖຽນລະພາບດ້ານການເມືອງທີ່ໜັກແໜ້ນ, ສັງຄົມມີຄວາມສະຫງົບເປັນລະບຽບຮຽບຮ້ອຍ ແຂວງໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ ບໍ່ວ່າທາງດ້ານເສດຖະກິດ-ສັງຄົມ ມີທ່າກ້າວຂະຫຍາຍຕົວ ອັນພົ້ນເດັ່ນແມ່ນສາມາດເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນເປັນກ້າວໆ.

ໃນນາມເປັນຕົວແທນຂອງປະຊາຊົນບັນດາເຜົ່າຊາວແຂວງສາລະວັນ ກໍໄດ້ປະກອບສ່ວນປະຕິບັດສາມພາລະບົດບາດຂອງຕົນຢ່າງຖືກຕ້ອງ ໃນນັ້ນໄດ້ສຸມໃສ່ສ້າງ-ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ, ຄົ້ນຄວ້າຕົກລົງບັນຫາພື້ນຖານຂອງຊາດ ແລະ ຕິດຕາມກວດກາການປະຕິບັດໜ້າທີ່ຂອງອົງການບໍລິຫານ ແລະ ຕຸລາການ.

ເນື່ອງໃນໂອກາດວັນຊາດ 2 ທັນວາ ແລະ ວັນຄ້າຍວັນເກີດຂອງ ປະທານ ໄກສອນ ພົມວິຫານ ໄດ້ໝູນວຽນມາບັນຈົບຄົບຮອບອີກວາລະໜຶ່ງ ຂໍອວຍພອນແດ່ຜູ້ນຳພັກ-ລັດ ທຸກຂັ້ນຈົ່ງມີພະລານາໄມສົມບູນ ສືບຕໍ່ນຳພາປະເທດຊາດໃຫ້ຈະເລີນກ້າວໜ້າຍິ່ງໆຂຶ້ນ.

ນ້ຳໃຈວັນຊາດ 2 ທັນວາ ໝັ້ນຍືນ ປະທານ ໄກສອນ ພົມວິຫານ ຈົ່ງຍືນຍົງໃນພາລະກິດປະຕິວັດຂອງຊາດ ແລະ ຂອງພັກເຮົາຕະຫລອດໄປ.

# ປະເມີນການກໍ່ສ້າງພັກ ປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2022



(ສພຊ) ຕອນເຊົ້າວັນທີ 24 ພະຈິກ 2022 ສະພາປະຊາຊົນແຂວງຫລວງນ້ຳທາ ໄດ້ເປີດກອງປະຊຸມດຳເນີນຊີວິດການເມືອງຂອງໜ່ວຍພັກ ຂຶ້ນຢ່າງເປັນທາງການ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ພາຍໃຕ້ການເປັນປະທານຂອງສະຫາຍ ນາງ ອຸ່ນຫລ້າ ອ້ຽງລໍລາດ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ, ເລຂາໜ່ວຍພັກສະພາປະຊາຊົນ; ມີບັນດາສະຫາຍຕາງໜ້າຈາກອົງການກວດກາ, ຄະນະຈັດຕັ້ງ ແລະ ຄະນະໂຄສະນາອົບຮົມແຂວງ ພ້ອມດ້ວຍສະມາຊິກພັກພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ 27 ສະຫາຍ ຍິງ 10 ສະຫາຍ.

ໃນວາລະກອງປະຊຸມໄດ້ຮັບຟັງການຜ່ານຮ່າງບົດປະເມີນການກໍ່ສ້າງພັກ ປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2022 ຂອງໜ່ວຍພັກສະພາປະຊາຊົນແຂວງ ແລະ ຜ່ານບົດສຳຫລວດຕົນເອງ ເພື່ອຕີລາຄາຄືນແຕ່ລະດ້ານຂອງສະມາຊິກພັກ ເຊິ່ງໜ່ວຍພັກສະພາປະຊາຊົນແຂວງ ເປັນໜ່ວຍພັກເອກະລາດ ພາຍໃຕ້ການນຳພາ-ຊີ້ນຳໂດຍກົງຂອງຄະນະພັກພັກແຂວງ, ມີສະມາຊິກພັກທັງໝົດ 34 ສະຫາຍ ຍິງ 11 ສະຫາຍ ກວມເອົາ 72,34% ຂອງພະນັກງານລັດຖະກອນທັງໝົດ; ໃນໄລຍະ 1 ປີຜ່ານມາ ຄະນະໜ່ວຍພັກສະພາປະຊາຊົນແຂວງ ໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນໂດຍຮ່ວມຊີວິດພັກປະຈຳເດືອນ, ເຮັດໃຫ້ສະມາຊິກພັກ-ພະນັກງານ-ລັດຖະກອນ, ມີຄຸນທາດການເມືອງໜັກແໜ້ນ, ມີຄວາມຈົງຮັກພັກດີເຊື່ອໝັ້ນຕໍ່ການນຳພາຂອງພັກ, ຕັ້ງໜ້າປະຕິບັດໜ້າທີ່ວຽກງານວິຊາສະເພາະດ້ວຍຄວາມຮັບຜິດຊອບສູງ ແລະ ມີຜົນສຳເລັດຕາມລຳດັບຄາດໝາຍ. ພ້ອມດຽວກັນນີ້, ສະມາຊິກພັກແຕ່ລະສະຫາຍໄດ້ຜ່ານບົດສຳຫລວດຂອງຕົນ, ປະກອບຄຳຄິດເຫັນຢ່າງກົງໄປກົງມາ ເພື່ອຕີລາຄາຄືນແຕ່ລະດ້ານຄື: ຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ແນວຄິດ, ສະຕິຕໍ່ການຈັດຕັ້ງ ແລະ ລະບຽບວິໄນຂອງພັກ, ແບບແຜນນຳພາ ແລະ ວິທີເຮັດວຽກ, ຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງ ແລະ ພ້ອມກັນໃຫ້ຄະແນນຕົນເອງ ແລະ ຄະແນນປິດລັບເຊິ່ງກັນແລະກັນ ເພື່ອຈະສືບຕໍ່ສະຫລຸບຜົນການດຳເນີນຊີວິດການເມືອງຄັ້ງນີ້ ໃຫ້ໄດ້ປະກາດຮັບຮອງໃນຂັ້ນຕໍ່ໄປ.

(ນາງ ອາເມີງ ວິແຄລູ)

# ອອກແຮງງານລວມ ເພື່ອຂ່ຳນັບຮັບຕ້ອນວັນສຳຄັນຕ່າງໆ



(ສພຊ) ໃນວັນທີ 29 ພະຈິກ 2022 ຄະນະຮາກຖານກຳມະບານ ພ້ອມດ້ວຍສະມາຊິກກຳມະບານສະພາປະຊາຊົນແຂວງສາລະວັນ ໄດ້ເຂົ້າຮ່ວມຂະບວນການອອກແຮງງານລວມ ອະນາໄມຕາມເສັ້ນທາງພາຍໃນເທສະບານເມືອງສາລະວັນ ແຂວງສາລະວັນ ເພື່ອຂ່ຳນັບຮັບຕ້ອນວັນສຳຄັນຕ່າງໆຂອງຊາດ-ຂອງພັກ ໂດຍສະເພາະແມ່ນເພື່ອຕ້ອນຮັບວັນຊາດທີ 2 ທັນວາ ຄົບຮອບ 47 ປີ (2 ທັນວາ 1975-2 ທັນວາ 2022).

ການເຂົ້າຮ່ວມຂະບວນການຄັ້ງນີ້ ແມ່ນໄດ້ປະຕິບັດຕາມແຈ້ງການຂອງສະຫະພັນກຳມະບານແຂວງ ສະບັບເລກທີ 37/ສກຂ.ສວ, ລົງວັນທີ 25 ພະຈິກ 2022 ເຊິ່ງໄດ້ອະນາໄມເກັບຂີ້ເຫຍື້ອ ແລະ ປັດກວາດໃບໄມ້ຕາມເສັ້ນທາງດ້ານໜ້າຫ້ອງວ່າການປົກຄອງແຂວງ ເລີ່ມແຕ່ໂຄ້ງທາງລົງບ້ານເຕົ້າປູນ ໄປຮອດ 4 ແຍກສະໂມສອນໃຫຍ່ຂອງຫ້ອງວ່າການປົກຄອງແຂວງ ໂດຍໄດ້ພ້ອມກັນເອົາໃຈໃສ່ດ້ວຍຄວາມຮັບຜິດຊອບ ເພື່ອສ້າງຄວາມເປັນລະບຽບຮຽບຮ້ອຍ ແລະ ສະອາດງາມຕາ.

(ນາງ ຄັດສອນ ຮຸ່ງສະຫວ່າງ ແລະ ດີລຳພົນ ພົມມະຈັນ)

# ສສຊ ສະໜັບສະໜູນໃຫ້ສົ່ງເສີມຜະລິດຕະພັນພາຍໃນໃຫ້ເຂັ້ມແຂງ

ປັດຈຸບັນແມ່ນໄລຍະການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ໃນບົດນີ້ ກໍຍັງແມ່ນການສະເໜີບົດຄຳເຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ໃນວາລະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ເມື່ອວັນທີ 13 ມິຖຸນາ 2022 ເຊິ່ງທ່ານ ອຸດົມ ວົງໄກສອນ ສສຊ ປະຈຳເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ ໄດ້ມີຄຳເຫັນວ່າ: ຂໍຕາງໜ້າ ສສຊ ເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ ປະກອບຄຳເຫັນຕໍ່ບົດລາຍງານຂອງລັດຖະບານ, ຂ້າພະເຈົ້າສະແດງຄວາມເຫັນດີເປັນເອກະພາບຕໍ່ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແຜນເງິນຕາຂອງບັນດາທ່ານສະມາຊິກລັດຖະບານທີ່ໄດ້ລາຍງານໄປແລ້ວ. ພ້ອມນີ້, ກໍເຫັນດີເປັນເອກະພາບກັບບັນດາທ່ານ ສສຊ ທີ່ໄດ້ປະກອບຄຳຄິດຄຳເຫັນ ແລະ ສະແດງຄວາມຊົມເຊີຍຕໍ່ການສູ້ຊົນຂອງລັດຖະບານໃນ 6 ເດືອນຜ່ານມາ ທີ່ສາມາດບັນລຸບາງຄາດໝາຍຈຳນວນໜຶ່ງ ແລະ ຄວາມພະຍາຍາມແກ້ໄຂບັນຫາທີ່ເຄັ່ງຮ້ອນໃນປັດຈຸບັນ ທີ່ມີຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ເປັນຕົ້ນແມ່ນບັນຫາສິນຄ້າອຸປະໂພກ-ບໍລິໂພກມີລາຄາສູງ, ບັນຫາເງິນເຟີ້, ບັນຫານ້ຳມັນລາຄາສູງ ບັນຫາດັ່ງກ່າວເຫລົ່ານີ້ ຂ້າພະເຈົ້າເຫັນວ່າກໍບໍ່ແມ່ນຜົນກະທົບແຕ່ປະເທດລາວເຮົາຢ່າງດຽວ ຢູ່ຫລາຍປະເທດໃນທົ່ວໂລກກໍມີຜົນກະທົບເຊັ່ນກັນ ແຕ່ສະພາບທີ່ເກີດຂຶ້ນໃນປະເທດເຮົາ ຂ້າພະເຈົ້າເຫັນວ່າກໍມີຜົນກະທົບໜັກໜ່ວງສົມຄວນຫລາຍກວ່າປະເທດອື່ນນັ້ນກໍແມ່ນຍ້ອນມີຫລາຍປັດໄຈທັງພາຍໃນ ແລະ ພາຍນອກ ສະນັ້ນ, ນອກຈາກວິທີການ ແລະ ມາດຕະການທີ່ໄດ້ກຳນົດໄວ້ແລ້ວ ຂ້າພະເຈົ້າຂໍສະເໜີທັງເປັນການຮຽກຮ້ອງມາຍັງລັດຖະບານ, ການນຳທຸກຂັ້ນ ທຸກພາກສ່ວນໃນສັງຄົມ ຕ້ອງຍົກສູງນ້ຳໃຈຮັກຊາດອັນດູດດື່ມ ສ້າງຄວາມສາມັກຄີເປັນເອກະພາບໃນການຕັດສິນໃຈສູງແກ້ໄຂວິກິດການດັ່ງກ່າວໃນຄັ້ງນີ້ ເອົາໃຈໃສ່ຢ່າງຈິງຈັງບັນດາທ່ານ ຖືເປັນບັ້ນຮົບໜຶ່ງທີ່ດຸເດືອດຂ້ຽວຂາດທີ່ສຸດ ພວກເຮົາຕ້ອງໄດ້ຮ່ວມຈິດຮ່ວມໃຈອົດທົນຜ່ານຜ່າ ແລະ ມີຄວາມເສຍສະຫລະສູງສຸດເພື່ອຊາດເພື່ອປະຊາຊົນຢ່າງແທ້ຈິງ ຈຶ່ງຈະສາມາດຜ່ານວິກິດຄັ້ງນີ້ໄປໄດ້.

ອີກບັນຫາໜຶ່ງທີ່ຂ້າພະເຈົ້າໜ້າເປັນຫ່ວງທີ່ສຸດໃນຕໍ່ໜ້າ ຢ້ານວ່າປີຕໍ່ໄປພວກເຮົາຈະພົບກັບບັນຫາການຂາດແຄນສະບຽງອາຫານ ໂດຍສະເພາະແມ່ນເຂົ້າກິນຍ້ອນວ່າປັດໄຈພາຍນອກກໍໄດ້ຮັບຜົນກະທົບຍ້ອນບັນຫາສົງຄາມ, ການຂວ້ຳບາດບໍ່ສາມາດສົ່ງສິນຄ້າປະເພດພືດ ຫລືທັນຍາຫານອອກໄດ້ ປະເພດປຸຍ ກໍບໍ່ສາມາດສົ່ງເມັດພືດເພື່ອສົ່ງອອກຕ່າງປະເທດຂາຍໄດ້ ຫລາຍປະເທດແມ່ນໄດ້ໂຈະ ຫລືວ່າຢຸດຕິການສົ່ງອອກສິນຄ້າທັນຍາຫານເພື່ອບໍ່ໃຫ້ປະເທດໂຕເອງຕົກຢູ່ໃນສະພາບທີ່ວ່າຂາດແຄນດ້ານອາຫານ ສຳລັບປະເທດເຮົາບັນຫາລາຄານ້ຳມັນລາຄາສູງ ພ້ອມນີ້ກໍຍັງຂາດແຄນສິນຄ້າ ລາຄາກໍສູງ ຊ້ຳພັດເກີດໃນໄລຍະທີ່ປະຊາຊົນເຮົາກຳລັງສຸມໃສ່ທຳການຜະລິດໃນລະດູຝົນ ໂດຍສະເພາະແມ່ນປູກເຂົ້ານາປີ ເຮັດໃຫ້ປະຊາຊົນພົບຄວາມຫຍຸ້ງຍາກທີ່ສຸດ ລາຄາປຸ໋ຍກໍເພີ່ມຂຶ້ນ ປີ 2021 ລາຄາປຸ໋ຍຢູ່ທີ່ສອງແສນແປດສິບພັນແຕ່ມາຮອດປັດຈຸບັນແມ່ນເກືອບໜຶ່ງລ້ານກີບຕໍ່ເປົາ ເມື່ອປຽບທຽບກັນແລ້ວເຫັນວ່າການທຳການຜະລິດ ຫລືການປູກເຂົ້າຖ້າທຽບໃສ່ລະແມ່ນປະຊາຊົນກໍຄິດວ່າບໍ່ຄຸ້ມຄ່າປານໃດ ສະນັ້ນ, ປະຊາຊົນຈຳນວນໜຶ່ງກໍໃຊ້ວິທີຫວ່ານພໍແຕ່ກຸ້ມກິນ ດັ່ງນັ້ນ, ກໍບໍ່ສາມາດຈະສົ່ງອອກເປັນສິນຄ້າໄດ້ ຕໍ່ໄປພວກເຮົາຈະບໍ່ມີສິນຄ້າໂດຍສະເພາະແມ່ນເຂົ້າ ເພາະວ່າສະມັດຕະພາບໃນການເຂົ້າຫວ່ານແມ່ນບໍ່ສູງ ແລະ ບໍ່ສາມາດສະໜອງເປັນສິນຄ້າໄດ້ ອັນນີ້ຂ້າພະເຈົ້າຈຶ່ງຢາກສະເໜີລັດຖະບານໂດຍສະເພາະກະຊວງກ່ຽວຂ້ອງໃຫ້ລົງຕິດຕາມຊຸກຍູ້ການຜະລິດຂອງປະຊາຊົນຢ່າງໃກ້ຊິດຕິດແທດຢ່າງຈິງຈັງ ພ້ອມທັງມີວິທີການ ແລະ ມາດຕະການແກ້ໄຂຢ່າງທັນການ ຖ້າບໍ່ດັ່ງນັ້ນພວກເຮົາຈະພົບວິກິດດ້ານສະບຽງອາຫານຢ່າງແນ່ນອນ.

ໄລຍະນີ້ ພວກເຮົາພົບພໍ້ກັບບັນຫາດ້ານເສດຖະກິດທີ່ມີຄວາມຫຍຸ້ງຍາກທີ່ສຸດ, ໜັກໜ່ວງທີ່ສຸດ ແຕ່ຂ້າພະເຈົ້າເຫັນວ່າກໍຍັງມີກາລະໂອກາດຢູ່ ໂດຍສະເພາະແມ່ນການສ້າງຄ່ານິຍົມໃຫ້ແກ່ຄົນລາວຫັນກັບຄືນມາຊົມໃຊ້ຜະລິດຕະພັນພາຍໃນຂອງພວກເຮົາເພີ່ມຂຶ້ນ ຂ້າພະເຈົ້າເຫັນວ່າຜະລິດຕະພັນຂອງພວກເຮົາກໍມີຫລາຍສົມຄວນ ໂດຍສະເພາະເຄື່ອງບໍລິໂພກ-ອຸປະໂພກ ແປ້ງນົວ, ນ້ຳຕານ, ເກືອ, ໝີ່ສຳເລັດຮູບ, ນ້ຳຢາລ້າງຖ້ວຍ, ສະບູ, ແຟັບ ແລະ ອື່ນໆ. ດັ່ງທີ່ຂ້າພະເຈົ້າລົງເກັບກຳຂໍ້ມູນເຫັນວ່າປະຊາຊົນປັດຈຸບັນມີຄວາມສົນໃຈຫລາຍຕໍ່ສິນຄ້າຂອງພວກເຮົາ. ພ້ອມນັ້ນ, ກໍຫັນມາໃຊ້ຜະລິດຕະພັນຂອງລາວເພີ່ມຂຶ້ນ ແຕ່ວ່າເຫັນຢູ່ເຂດນອກບໍ່ທັນມີຫລາຍພໍປານໃດຢູ່ຕາມຮ້ານຄ້າ ແຕ່ເຖິງຢ່າງໃດກໍຕາມພວກເຮົາກໍຕ້ອງໄດ້ປັບປຸງຜະລິດຕະພັນພາຍໃນຂອງພວກເຮົາ ລວມທັງຄຸນນະພາບ ແລະ ປະລິມານໃຫ້ດີຂຶ້ນກວ່າເກົ່າ ຕາມຂໍ້ມູນຄວາມຄິດເຫັນຂອງສັງຄົມຕ່າງໆ ສະເໜີຕໍ່ຜະລິດຕະພັນຂອງລາວເຮົາ ຕາມຂ້າພະເຈົ້າໄດ້ສັງລວມມີດັ່ງນີ້:

ບັນຫາທີ 1: ດ້ານລາຄາເຫັນວ່າບາງຊະນິດສິນຄ້າກໍຍັງມີລາຄາສູງ;

ບັນຫາທີ 2: ຄວນຈະໄດ້ປັບປຸງດ້ານຄຸນນະພາບໃຫ້ສູງຂຶ້ນ ແລະ ປະລິມານຫລາຍໃຫ້ຂຶ້ນໂດຍສະເພາະແມ່ນເຄື່ອງໃຊ້ປະຈຳວັນ;

ບັນຫາທີ 3: ການຫຸ້ມຫໍ່ (Packaging) ກໍຍັງມີລັກສະນະບໍ່ທັນແໜ້ນໜາ ແລະ ບໍ່ທັນສະດວກ;

ບັນຫາທີ 4: ການເກັບຮັກສາຍັງບໍ່ໄດ້ດີ;

ບັນຫາທີ 5: ການສົ່ງເສີມການຜະລິດຍັງບໍ່ທັນສູງເທົ່າທີ່ຄວນ ໂດຍສະເພາະແມ່ນການເຂົ້າເຖິງກອງທຶນ SME ຖືວ່າມີຄວາມຫຍຸ້ງຍາກ.

ພ້ອມດຽວກັນນີ້, ຂ້າພະເຈົ້າກໍເຫັນວ່າພວກເຮົາຈະຕ້ອງໄດ້ເພີ່ມທະວີການຜະລິດໃຫ້ມີຄວາມຫລາກຫລາຍ ໂດຍສະເພາະສິນຄ້າທີ່ຄົນລາວນິຍົມຊົມໃຊ້ກັນປະຈຳວັນ ເຊັ່ນ ນ້ຳປາ, ນ້ຳສະອື້ວເຫລົ່ານີ້ເປັນຕົ້ນ ເຫັນວ່າປະເທດເຮົາກໍອຸດົມສົມບູນຊັບພະຍາກອນທຳມະຊາດແຫລ່ງນ້ຳກໍຫລາຍຢູ່, ດັ່ງນັ້ນ ຈຶ່ງສະເໜີມາຍັງບັນດາລັດຖະບານ ແລະ ກະຊວງກ່ຽວຂ້ອງ ຊອກຫາຄວາມເປັນໄປໄດ້ໃນການຜະລິດເອງຈະດີທີ່ສຸດ ແລະ ຮຽກຮ້ອງໃຫ້ເພີ່ມຄວາມເຂັ້ມຂົ້ນເຂົ້າໃນການເຮັດວຽກໃນດ້ານນີ້ຢ່າງແຂງແຮງ ຕາມຄຳຂວັນຂອງພວກເຮົາທີ່ວ່າ: "ລາວເຮັດ ລາວໃຊ້ ລາວໄດ້ລາວຈະເລີນ".

## ສະພາປະຊາຊົນແຂວງຫລວງນ້ຳທາ ປາຖະກະຖາວັນສະຖາປະນາ ສປປລາວ ຄົບຮອບ 47 ປີ




(ສພຊ) ຕອນເຊົ້າຂອງວັນທີ 1 ທັນວາ 2022 ສະພາປະຊາຊົນແຂວງຫລວງນ້ຳທາ ໄດ້ຈັດພິທີປາຖະກະຖາວັນສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄົບຮອບ 47 ປີ (2 ທັນວາ 1975-2 ທັນວາ 2022) ແລະ ວັນຄ້າຍວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 102 ປີ (13 ທັນວາ 1920-13 ທັນວາ 2022) ຂຶ້ນທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ຈັນທະສຸລິນ ໝັ້ນປະດິດ ປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ສະພາປະຊາຊົນແຂວງ; ເຂົ້າຮ່ວມໂດຍຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານ-ລັດຖະກອນເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ທ່ານ ຈັນທະສຸລິນ ໝັ້ນປະດິດ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ສະພາປະຊາຊົນແຂວງ ໄດ້ປາຖະກະຖາວັນສະຖາປະນາສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ຄົບຮອບ 47 ປີ (2 ທັນວາ 1975-2 ທັນວາ 2022) ເພື່ອນຳພາປະຊາຊົນເຮັດໃຫ້ສຳເລັດພາລະກິດປົດປ່ອຍຊາດ, ຕໍ່ສູ້ກູ້ຊາດຕ້ານພວກລ່າເມືອງຂຶ້ນຝຣັ່ງທີ່ກັບຕ່າວຄືນມາຮຸກຮານປະເທດລາວ ຄັ້ງທີ 2 ໃນປີ 1946-1954 ພັກເຮົາໄດ້ວາງແນວທາງການຕໍ່ສູ້ຕ້ານຂອງການປະຕິວັດລາວ, ຕໍ່ຕ້ານຍືດເຍື້ອຍາວນານ, ປຸກລະດົມຂົນຂວາຍນຳພາການກໍ່ສ້າງຖານທີ່ໝັ້ນຂອງການປະຕິວັດພຽງແຕ່ໄລຍະສັ້ນໆ,ຖານທີ່ໝັ້ນການປະຕິວັດໄດ້ເກີດຂຶ້ນຢູ່ໃນຂົງເຂດຕ່າງໆ ແລະ ໄດ້ສ້າງຕັ້ງກອງກຳລັງປະກອບອາວຸດປະຕິວັດກໍໄດ້ຮັບການສ້າງຕັ້ງຂຶ້ນ, ມາຮອດໃນເດືອນເມສາ ປີ 1948 ສູນກາງພັກກອມມູນິດອິນດູຈີນໄດ້ຕົກລົງສ້າງຕັ້ງກອງຕະລຸມບອນລາວເໜືອໂດຍແມ່ນປະທານ ໄກສອນ ພົມວິຫານ ເປັນຜູ້ບັນຊາ, ກອງຕະລຸມບອນນີ້ມີໜ້າທີ່ກໍ່ສ້າງຮາກຖານ, ຈັດຕັ້ງປະກອບອາວຸດ ກໍ່ສ້າງຖານທີ່ໝັ້ນຢູ່ເຂດຕາເວັນອອກສ່ຽງເໜືອຢູ່ຖານທີ່ໝັ້ນບ້ານລາວຮຸ່ງ ເມືອງຊຽງຄໍ້ ແຂວງຫົວພັນເປັນບ່ອນກອງລາດຊະວົງເຄື່ອນໄຫວໂດຍແມ່ນປະທານໄກສອນພົມວິຫານເປັນຜູ້ບັນຊາການ ແລະ ໄດ້ປະກາດສ້າງຕັ້ງກອງທັບລາວອິດສະຫລະຂຶ້ນຢ່າງເປັນທາງການໃນວັນທີ 20 ມັງກອນ 1949 ກຳລັງອາວຸດປະຕິວັດໄດ້ຮັບການກໍ່ສ້າງຕັ້ງຂະຫຍາຍຕົວຢ່າງແຂງແຮງຍິ່ງຕື່ຍິ່ງໄດ້ຮັບໄຊຊະນະອັນໃຫຍ່ຫລວງ. ໃນຕົ້ນປີ 1953 ແລະ ກອງປະຊຸມໃຫ່ຍສ້າງຕັ້ງພັກປະຊາຊົນລາວໄດ້ໄຂຂຶ້ນໃນວັນທີ 22 ມີນາ 1955 ກອງປະຊຸມໄດ້ວາງແຜນໂຄງການ, ການເມືອງເພື່ອນຳພາພາລະກິດປະຕິວັດຊາດປະຊາທິປະໄຕ ພ້ອມທັງໄດ້ກຳນົດໜ້າທີ່ສະເພາະໜ້າຂອງການປະຕິວັດລາວແມ່ນນຳພາທົ່ວປວງຊົນສາມັກຄີຕໍ່ສູ້ເຮັດໃຫ້ສຳເລັດພາລາກິດປົດປ່ອຍຊາດ, ສ້າງປະເທດລາວໃຫ້ເປັນປະເທດສັນຕິພາບ, ເອກະລາດ, ປະຊາທິປະໄຕ ມີຄວາມສາມັກຄີປວງຊົນທັງຊາດຢ່າງແໜ້ນແຟ້ນ, ມີຄວາມຕັດສິນໃຈຕໍ່ສູ້ຢ່າງເດັດດ່ຽວໜຽວແໜ້ນ ແລະ ພັກໄດ້ວາງແນວທາງລຸກຮື້ດ້ວຍ 3 ບາດກ້າວ, ຄ້ອນຍຸດທະສາດ ລຸກຮື້ຂຶ້ນຢຶດອຳນາດສິດເປັນເຈົ້າ ແລະ ສ້າງຕັ້ງອຳນາດການປົກຄອງປະຕິວັດຂຶ້ນໃນຂອບເຂດທີ່ປະເທດຈົນສາມາດຍາດມາໄດ້ໄຊຊະນະຢ່າງສົມບູນໃນປີ 1975.

ພ້ອມນັ້ນ, ຍັງໄດ້ປາຖະກະຖາວັນຄ້າຍວັນເກີດປະທານໄກສອນ ພົມວິຫານ ຄົບຮອບ 102 ປີ (13 ທັນວາ 1920-13 ທັນວາ 2022) ພ້ອມທັງຍົກໃຫ້ເຫັນຊີວິດ ແລະ ການເຄື່ອນໄຫວການປະຕິວັດຊາດຂອງປະທານໄກສອນ ພົມວິຫານ ຢ່າງລະອຽດ ທີ່ເຕັມໄປດ້ວຍຄວາມໝາຍສຳຄັນ.

(ນາງ ອຳພອນ ສີປະເສີດ)

## ພິທີມອບໃບຍ້ອງຍໍຜົນງານການຈັດຕັ້ງປະຕິບັດ 3 ດີ ໄລຍະປີ 2016-2020



(ສພຊ) ເມື່ອເດືອນພະຈິກ 2022 ຄະນະໜ່ວຍສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງ (ສພຂ) ເຊກອງ ໄດ້ຈັດພິທີມອບໃບຍ້ອງຍໍ ແລະ ຊົມເຊີຍຜົນງານການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ໄລຍະປີ 2016-2020 ທີ່ສະໂມສອນສະພາປະຊາຊົນແຂວງເຊກອງ ໂດຍການເຂົ້າຮ່ວມເປັນປະທານຂອງສະຫາຍນາງ ຄຳເສັງ ທຸມມະວົງສາ ກຳມະການພັກແຂວງ, ເລຂາຄະນະພັກຮາກຖານ, ຮອງປະທານສະພາປະຊາຊົນແຂວງ; ມີບັນດາທ່ານຄະນະໜ່ວຍສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງ, ອົງການຈັດຕັ້ງກຳມະບານ, ອົງການຈັດຕັ້ງຊາວໜຸ່ມ ພ້ອມດ້ວຍສະມາຊິກໜ່ວຍສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ສະຫາຍ ນາງ ແກ້ວໄພລິນ ດາລາລັດສະໝີ ຮອງປະທານໜ່ວຍສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງ ໄດ້ຜ່ານບົດລາຍງານການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ໄລຍະຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າໂດຍຫຍໍ້ ແລະ ຜ່ານບົດສະຫລຸບການເຄື່ອນໄຫວວຽກງານ ປະຈຳ 3 ເດືອນ (7-9) ແລະ ທິດທາງແຜນການ 3 ເດືອນທ້າຍປີ 2022 ຂອງໜ່ວຍສະຫະພັນແມ່ຍິງຮາກຖານ ສພຂ. ພ້ອມກັນນັ້ນ, ກໍໄດ້ມອບໃບຍ້ອງຍໍ ແລະ ໃບຊົມເຊີຍໃຫ້ບັນດາສະມາຊິກແມ່ຍິງ 3 ດີ ໃຫ້ບຸກຄົນທີ່ມີຜົນງານໃນການຈັດຕັ້ງປະຕິບັດຂະບວນການແຂ່ງຂັນ 3 ດີ ໄລຍະປີ 2016-2020 ຂອງໜ່ວຍສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງ ເຊິ່ງໃນນັ້ນ, ບຸກຄົນ 3 ດີ ປະເພດ I ຈຳນວນ 13 ສະຫາຍ ແລະ ບຸກຄົນ 3 ດີ ປະເພດ II ຈຳນວນ 2 ສະຫາຍ.

ໂອກາດດັ່ງກ່າວ, ສະຫາຍ ນາງ ຄຳເສັງ ທຸມມະວົງສາ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານທີ່ໜ່ວຍສະຫະພັນແມ່ຍິງສະພາປະຊາຊົນແຂວງເຊກອງທີ່ຍາດມາໄດ້ໃນໄລຍະຜ່ານມາ ແລະ ສະຫາຍໄດ້ເນັ້ນຕື່ມອີກວ່າ: ໃຫ້ຄະນະໜ່ວຍສະຫະພັນແມ່ຍິງຮາກຖານ ເອົາໃຈໃສ່ໃນແຜນຍຸດທະສາດ, ແຜນພັດທະນາແມ່ຍິງຕ້ອງເຮັດຢ່າງຕໍ່ເນື່ອງ ເພື່ອໃຫ້ເອື້ອຍນ້ອງແມ່ຍິງ ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ ເພື່ອໃຫ້ອົງການຈັດຕັ້ງແມ່ຍິງມີຄວາມເຂັ້ມແຂງ ແລະ ຮຽກຮ້ອງໃຫ້ສະມາຊິກແມ່ຍິງແຕ່ລະສະຫາຍ ເອົາໃຈໃສ່ເຝິກຝົນຫໍ່ຫລອມຕົນເອງ, ຍົກລະດັບຄວາມຮູ້ຄວາມສາມາດ ຕໍ່ວຽກງານວິຊາສະເພາະ ເພື່ອນຳໃຊ້ເຂົ້າໃນວຽກງານທີ່ຕົນຮັບຜິດຊອບໃຫ້ໄດ້ຮັບຜົນສຳເລັດ; ຍົກລະດັບສີມືແຮງງານເພື່ອພັດທະນາເສດຖະກິດຄອບຄົວໃຫ້ດີຂຶ້ນ, ຈົ່ງມີຄວາມຮັບຜິດຊອບຕໍ່ວຽກງານທີ່ໄດ້ຮັບການມອບໝາຍ, ໃຫ້ມີຄວາມສາມັກຄີຊ່ວຍເຫລືອເຊິ່ງກັນແລະກັນ, ສືບຕໍ່ຈັດຕັ້ງປະຕິບັດຂະບວນການຂໍ້ແຂ່ງຂັນ 3 ດີຂອງແມ່ຍິງ ຄື: ພົນລະເມືອງດີ, ພັດທະນາດີ ແລະ ສ້າງຄອບຄົວດີ ຕິດພັນກັບຂະບວນການ 5 ເປັນເຈົ້າຂອງສະຫະພັນກຳມະບານລາວ, 4 ບຸກຂອງຊາວໜຸ່ມປະຊາຊົນປະຕິວັດລາວ ຕິດພັນກັບຂະບວນການແຂ່ງຂັນຮັກຊາດ-ພັດທະນາ ແລະ ການສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ.

(ນາລີວັນ)



## ສຸກສະບາຍຫາຍໂຣຄ

# ໝາກມອນ

ແປ ແລະ ຮຽບຮຽງໂດຍ: ສາວແວ່ນ



ໝາກມອນ ເປັນໝາກໄມ້ທີ່ມີປະໂຫຍດຕໍ່ສຸຂະພາບ ເພາະເປັນໝາກໄມ້ທີ່ໃຫ້ພະລັງງານ ທັງມີສານອາຫານທີ່ສຳຄັນເຊັ່ນ: ຄາໂບໄຮເດດ ແລະ ເສັ້ນໄຍທີ່ເຮັດໃຫ້ອີ່ມໄວ ນອກນີ້, ຍັງຊ່ວຍເພີ່ມພະລັງງານໃຫ້ຮ່າງກາຍອີກດ້ວຍ ນອກນັ້ນ, ຍັງຖືກຈັດເປັນໝາກໄມ້ທີ່ມີນ້ຳຫລາຍ ເພາະ 88% ຂອງໝາກມອນແມ່ນນ້ຳ ຈຶ່ງສາມາດຊ່ວຍເພີ່ມລະດັບນ້ຳໃນຮ່າງກາຍ ແລະ ຊ່ວຍປ້ອງກັນການຂາດນ້ຳໄດ້.

ໝາກມອນ ຍັງອຸດົມໄປດ້ວຍວິຕາມິນ ແລະ ແຮ່ທາດທີ່ສຳຄັນ ເຊັ່ນ: ວິຕາມິນຊີ, ວິຕາມິນອີ, ວິຕາມິນເຄ1, ທາດເຫລັກ, ໂພແທດຊຽມ ແລະ ຍັງເປັນແຫລ່ງຂອງສານຕ້ານອະນຸມູນອິດສະຫລະທີ່ມີປະໂຫຍດ ເຊັ່ນ: ແອນໂທໄຊຍານິນ (Anthocyanin), ໄຊຍານິດິນ (Cyanidin), ເມຣິເຊຕິນ (Myricetin), ອາຊິດ ໂຄໂລຈີນິກ (Chlorogenic Acid), ລູທິນ (Rutin) ເຊິ່ງສານຕ້ານອະນຸມູນອິດສະຫລະເຫລົ່ານີ້ ແມ່ນດີຕໍ່ລະບົບພູມຕ້ານທານ ແລະ ປ້ອງກັນຈຸລັງໃນຮ່າງກາຍ ຈາກການຖືກທຳລາຍໂດຍສານອະນຸມູນອິດສະຫລະ

### ປະໂຫຍດຂອງໝາກມອນ

**1. ຫລຸດຜ່ອນຄວາມສ່ຽງຂອງມະເຮັງ**

ສານຕ້ານອະນຸມູນອິດສະຫລະ ເປັນສານອາຫານສຳຄັນ ທີ່ຊ່ວຍໃຫ້ລະບົບພູມຕ້ານທານໃນຮ່າງກາຍແຂງແຮງ ຊ່ວຍກະຕຸ້ນການເຮັດວຽກຂອງເຊວ ແລະ ປ້ອງກັນຈຸລັງຕ່າງໆໃນຮ່າງກາຍ ຈາກສານອະນຸມູນອິດສະຫລະທີ່ບໍ່ດີ ຍິ່ງໄປກວ່ານັ້ນ ສານຕ້ານອະນຸມູນອິດສະຫລະ ຍັງຊ່ວຍປ້ອງກັນບໍ່ໃຫ້ຈຸລັງມະເຮັງຂະຫຍາຍຕົວ ຫລື ຫລຸດໂອກາດການເປັນມະເຮັງ

**2. ດີຕໍ່ກັບການຫລຸດນ້ຳໜັກ**

ໝາກມອນ ມີເສັ້ນໃຍຫລາຍ ແລະ ແຄລໍຣີຕ່ຳ ຈຶ່ງເໝາະສົມສຳລັບຜູ້ທີ່ຢູ່ໃນໄລຍະຫລຸດນ້ຳໜັກ ຫລື ຄວບຄຸມອາຫານ ເພາະເສັ້ນໄຍຈະເຮັດໃຫ້ຮູ້ສຶກອີ່ມດົນ, ບໍ່ຫິວເລື້ອຍໆ ແລະ ບໍ່ເຮັດໃຫ້ແຄລໍລີ່ສູງຂຶ້ນ ເພາະວ່າມີແຄລໍລີ່ຕ່ຳ ຈຶ່ງສາມາດຈຳກັດ ຫລື ຄວບຄຸມພະລັງງານປະຈຳວັນໄດ້.

**3. ດີຕໍ່ສຸຂະພາບຕັບ**

ຕັບ ເປັນອະໄວຍະວະທີ່ມີຄວາມສຳຄັນຫລາຍໃນຮ່າງກາຍ ເພາະເຮັດໜ້າທີ່ໃນການກັ່ນຕອງສານພິດຕ່າງໆ ແລະ ທຳລາຍໄຂມັນ ທັງປ້ອງກັນບໍ່ໃຫ້ເລືອດກ້າມ ເຊິ່ງສານຕ້ານອະນຸມູນອິດສະຫລະ ໃນໝາກມອນຖືວ່າດີຫລາຍສຳລັບຕັບ ເພາະມັນຊ່ວຍລ້າງສານພິດໃນຕັບ ທັງຍັງຊ່ວຍປ້ອງກັນໄຂມັນຈາກການສະສົມໃນຕັບ ເຊິ່ງເປັນໜຶ່ງໃນສາເຫດຂອງພະຍາດໄຂມັນຫຸ້ມຕັບ.

**4. ປັບລະດັບນ້ຳຕານໃນເລືອດໃຫ້ຄົງທີ່**

ລະດັບນ້ຳຕານໃນເລືອດສູງ ເຮັດໃຫ້ເພີ່ມຄວາມສ່ຽງ ຕໍ່ການເປັນພະຍາດຫົວໃຈ ແລະ ພະຍາດເບົາຫວານ ເພື່ອປ້ອງກັນຄວາມສ່ຽງຂອງພະຍາດຊຳເຮື້ອເຫລົ່ານີ້ ການໃຫ້ຄວາມສຳຄັນຕໍ່ກັບການກິນອາຫານ ເປັນສິ່ງທີ່ບໍ່ຄວນເບິ່ງຂ້າມ ໂດຍສະເພາະໝາກມອນ ເຊິ່ງເປັນໝາກໄມ້ທີ່ມີເສັ້ນໃຍຫລາຍ ຖ້າກິນເປັນປະຈຳ ຈະຊ່ວຍໃຫ້ການດູດຊຶມຂອງນ້ຳຕານໃນກະແສເລືອດຊ້າລົງ ດັ່ງນັ້ນ, ຈຶ່ງຊ່ວຍປ້ອງກັນບໍ່ໃຫ້ລະດັບນ້ຳຕານໃນເລືອດສູງຂຶ້ນ.

**5. ທາດເຫລັກຫລາຍ**

ເຖິງວ່າທາດເຫລັກສ່ວນຫລາຍ ຈະມີຢູ່ໃນຊີ້ນ ຫລື ເຄື່ອງໃນສັດ ແຕ່ໝາກໄມ້ກໍອຸດົມດ້ວຍທາດເຫລັກເຊັ່ນດຽວກັນ ໂດຍສະເພາະແມ່ນໝາກມອນ ມີປະລິມານທາດເຫລັກຫລາຍເຖິງ 2,6 ມິນລີກຣາມ (ຕໍ່ໝາກມອນໜຶ່ງໜ່ວຍ) ເທົ່າກັບ 14% ຂອງປະລິມານທາດເຫລັກ ທີ່ຮ່າງກາຍຄວນໄດ້ຮັບໃນແຕ່ລະມື້.

ທາດເຫລັກມີປະໂຫຍດໃນການຊ່ວຍເກັບຮັກສາ ແລະ ການຂົນສົ່ງອົກຊີແຊນ ໄປສູ່ສ່ວນຕ່າງໆຂອງຮ່າງກາຍ, ປ້ອງກັນບໍ່ໃຫ້ຮ່າງກາຍເກີດອາການຂາດອົກຊີແຊນ ແລະ ຊ່ວຍກະຕຸ້ນການເຕີບໃຫຍ່ຂອງເມັດເລືອດຂາວ ເຊິ່ງເປັນຜົນດີຕໍ່ລະບົບພູມຕ້ານທານຂອງຮ່າງກາຍ ແລະ ຊ່ວຍປ້ອງກັນອາການແຊກຊ້ອນລະຫວ່າງການຖືພານຳອີກ.

www.sanook.com

## ສາລາກະວີ

# ລຸງໃນດວງໃຈ

\# ໂດຍ: ອານົງເດດ ສິງດາລັກ

※ ຄຳລຸງສອນສັ່ງໄວ້ ... ຍັງຈື່ຈຳດີ
ມິເຄີຍໄລລາລືມ ... ຈາກໃຈດວງນີ້
ຊົ່ວຊີວິຂໍຮຽນຮູ້ ... ຄຸນຄວາມດີຂອງທ່ານ
ປະທານໄກສອນ ຜູ້ນຳຄົນເກັ່ງກ້າ ... ສົມຊັ້ນຊື່ສຽງ ແທ້ໃດ!

※ ໃຜກໍຍໍຍົກຍ້ອງ ... ຊົມຊື່ນຜົນງານ
ທ່ານໄດ້ສຸມສະຕິປັນຍາ ... ເຫື່ອແຮງໂຮມສ້າງ
ວາງທິດທາງນຳພາສູ້ ... ຕີສັດຕູໝີ່ພ່າຍ
ຕ້ານການທຳລາຍໂຫດຮ້າຍ ຂອງສັດຕູປ່ວງບ້າ ... ມາເຂັ່ນຂ້າໝູ່ປະຊາ

※ ຄຸນສົມບັດລຸງພຽບພ້ອມ ... ສູງສົ່ງວິຊາສິນ
ມີຈິດໃຈຖະໜອມແພງ ... ແຜ່ນດິນລາວນີ້
ຫລາຍສິບປີຫາທາງແກ້ ... ມີຜົນແປເປັນຕ່າງ
ຢ່າງດຽວຄືຊາດເຊື້ອ ຊາວລາວພົງພີ່ນ້ອງ ... ໄກພົ້ນຈາກເຜດມານ ນັ້ນແລ້ວ!

※ ແມ່ນຊີວາດັບສິ້ນ ... ເສຍເລືອດກາຍຕົນ
ລຸງອົດທົນຍອມຕາຍ ... ເພື່ອດິນແດນດ້າວ
ເພື່ອປະຊາຊົນລາວໄດ້ ... ສະບາຍກາຍໃຈຊື່ນ
ອຸປະສັກໝື່ນຮ້ອຍ ລຸງບໍ່ຖອຍຖອດທໍ້ ... ເກງຢ້ານແຕ່ຢ່າງໃດ

※ ອີກໜຶ່ງຄືກອບກູ້ ... ເອກະລາດຄືນມາ
ລຸງໄດ້ປຸກລະດົມປະຊາ ... ຮ່ວມໃຈກັນເຂົ້າ
ສ້າງຕັ້ງພັກປະຊາຊົນປະຕິວັດລາວຂຶ້ນ ... ເປັນເລົາປືນໃຫຍ່
ສຸມໃສ່ຍິງກົ່ນມ້າງ ຂ້າຝັນມານໝູ່ຮ້າຍ ... ຕາຍດິ້ນຈາກຖິ່ນລາວ ຄັກເດ!

※ ພະຄຸນລຸງຫລາຍເລີດລ້ຳ ... ສູງກວ່າພູເຂົາ
ເອົາສິ່ງໃດມາທຽມ ... ທຽບຄຽງບໍ່ມີໄດ້
ຄວາມດີຫລາຍເຫລືອລົ້ນ ... ເກີນຄຳບັນຍາຍກ່າວ
ລູກຫລານລາວຂໍຈົດຈຳຈື່ໄວ້ ... ພະໄມນີ້ບໍ່ອາດລືມ ທ່ານເອີຍ!



## ທັກທາຍ ລະບາຍ

\# ສາວຈົ້ມ

### (ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

※ ***ຈົ້ມ***ເຊີຍວັນຄ້າຍວັນເກີດປະທານ ໄກສອນ ພົມວິຫານ ທີ່ໄດ້ໝູນວຽນມາບັນຈົບຄົບຮອບ 102 ປີ (13/12/1920-13/12/2022) ຄຸນຄວາມດີທ່ານສ້າງ ສານສືບເປັນຕຳນານ ປວງປະຊາຊົນລາວ ທໍ່ວທາປີແຄວ້ນ ເດີນໄຕ່ຕາມເທັນຮູ້ ບຸນຄຸນຍິ່ງໃຫຍ່ ປະທານສອນສ້າງໄວ້ ໃລກາຮູ້ທົ່ວເຖິງ ***ຊອບແລ້ວ!***

※ ***ກອງ***ປະຊຸມສະໄໝສາມັນ***ເທື່ອທີ*** 4 ຂອງສະພາແຫ່ງຊາດ ຊຸດທີ IX ພວມຄຶກຄື້ນ ເພາະເປັນຊ່ວງອາລະກ່ຽວກັບການພັດທະນາເສດຖະກິດ ວຽກເງິນຕາພ້ອມ ຫລາຍທ່ານມີຄຳເຫັນໃຫ້ ໄປລວງດຽວທິດທາງໃຫຍ່ ເຮັດແນວໃດປະຊາຊົນລາວຊີໄດ້ ມີສຸກພ້ອມພັດທະນາ ***ນັ້ນແລ້ວ!***

※ ທ່ານກາງບະຄອບຫລວງວຽງຈັນ ພວມດຳເນີນກອງປະຊຸມສະໄໝສາມັນ***ເທື່ອທີ*** 4 ຂອງສະພາແຫ່ງຊາດ ຊຸດທີ IX ແລວງຊຽງຂວາງແດນໝາວ ພວມກ້າວເຂົ້າສູ່ບັນຍາກາດງານມະຫາກຳກິລາແຫ່ງຊາດ ***ຄັ້ງທີ*** IX ຊຽງຂວາງເກມພວມລີເລີ້ມ ກຽມໄຂຂຶ້ນເປັນທາງການ ຫລາຍທ່ານກະກຽມໃຈ ທ່ຽວຊົມຍາມຍ້ຽມ ຈໍໃຫ້ກຽມອາພອນຜ້າ ຜືນໜາໄວ້ບັງທົ່ມ ຍາມເມື່ອລົມພັດຍູ້ ງິເຢັນຈ້ອຍເຂົ້າຮອດໃຈ ***ພຸ້ນໃດ!***

## ຊອບຍິ້ມ

\# ແອ່ນຕຸ້ງ

**ເລື່ອງ: ມົດງ່ານອິເສດ**

ເຫດເກີດທີ່ສວນສັດແຫ່ງໜຶ່ງ: ເມື່ອມົດບໍ່ພໍໃຈທີ່ຊ້າງຫຽວມາຢຽບຮັງຂອງພວກຕົນ ຈຶ່ງພ້ອມກັນຫຸ້ມກັດໂຕຊ້າງ, ຊ້າງກະດຽມຄືງເລີຍສັ່ນຊົນ ພິບໆ ມົດພາກັນຕົກລະ ຍັງເຫລືອແຕ່ມົດພຽງໂຕດຽວຈັບຢູ່ຄໍຊ້າງ ພວກເພື່ອນໆຂອງມົດທີ່ຫລຽວເຫັນໝູ່ໂຕໜຶ່ງຈັບຢູ່ເທິງຄໍຊ້າງ ເລີຍພາກັນຮ້ອງໃສ່ວ່າ: ເອົາເລີຍ! ເອົາເລີຍ! ບີບຄໍມັນຕາຍໂລດ!!!



## ຄະຕິເຕືອນໃຈ

\# ດອກຊະຍອມ

ຢ່າຜ່ານຄອງເມືອງ
ຢ່າເຄືອງຜູ້ເຖົ້າ
ຢ່າເວົ້າຄວາມຕາຍ

## ປະທານ...

ພາບ ເອກະລາດ, ອະທິປະໄຕ, ສັງຄົມວັດທະນະທຳ, ເສດຖະກິດໄດ້ຮັບການພັດທະນາເປັນກ້າວໆ, ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການຍົກສູງ ແລະ ປົວແປງດີຂຶ້ນ.

ໂດຍມີຄວາມສະດຸ້ງໄວຕໍ່ບັນຫາ, ກຳແໜ້ນສະຖານະການຂອງປະເທດ ແລະ ການນຳໃຊ້ບົດຮຽນຂອງປະເທດອ້າຍນ້ອງ, ປະທານ ໄກສອນ ພົມວິຫານ ໄດ້ມີແນວຄິດລິເລີ່ມຈິນຕະນາການແຫ່ງການປ່ຽນແປງໃໝ່ຢູ່ປະເທດລາວເຮົາ ໃນທ້າຍຊຸມປີ 70 ແລະ ໄດ້ກາຍເປັນແນວທາງປ່ຽນແປງໃໝ່ໃນກອງປະຊຸມໃຫຍ່ຄັ້ງທີ IV ຂອງພັກ, ເພິ່ນໄດ້ນຳພາການຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ຢ່າງຮອບດ້ານ ແລະ ມີຫລັກການຂອງພັກເຮົາ ດ້ວຍບາດກ້າວອັນເໝາະສົມໜັກແໜ້ນ ແລະ ໄດ້ຮັບຜົນສຳເລັດທີ່ໃຫຍ່ຫລວງ ແລະ ໜັກແໜ້ນ. ພວກເຮົາໃນຖານະທີ່ເປັນຄົນລາວແຫ່ງຍຸກໃໝ່ສຸດທີ່ມີຄວາມພາກພູມໃຈທີ່ຊາດລາວ, ປະເທດລາວ ໄດ້ມີຜູ້ນຳທີ່ແສນເຄົາລົບຮັກຄື ປະທານ ໄກສອນ ພົມວິຫານ ເຊິ່ງເປັນຜູ້ນຳທີ່ສະດຸ້ງໄວ, ກ້າຄິດ, ກ້າເຮັດ, ກ້າຮັບຜິດຊອບ ແລະ ນຳພາການປ່ຽນແປງໃໝ່ຢ່າງມີຫົວຄິດປະດິດສ້າງ.

ປະທານ ໄກສອນ ພົມວິຫານ ໄດ້ມີຄວາມເອົາໃຈໃສ່ຕໍ່ການສ້າງແລະປັບປຸງລະບົບການເມືອງອັນມີພັກປະຊາຊົນ ປະຕິວັດລາວ ເປັນແກນນຳ ເຊິ່ງຍາມໃດເພິ່ນກໍໄດ້ເອົາໃຈໃສ່ຕໍ່ການເພີ່ມທະວີບົດບາດການນຳພາຂອງພັກ, ປັບປຸງພັກດ້ານການເມືອງ, ແນວຄິດ, ການຈັດຕັ້ງ ແລະ ແບບແຜນວິທີນຳພາໃນສະໄໝເຊື່ອມໂຍງສາກົນ ແລະ ພາກພື້ນຍິ່ງມີຄວາມຈຳເປັນ. ຍາມໃດເພິ່ນກໍຖືສຳຄັນທີ່ສຸດຕໍ່ການກໍ່ສ້າງ ແລະ ປັບປຸງພັກ, ເພີ່ມທະວີວຽກງານສຶກສາອົບຮົມ, ເຝິກຝົນຫັດສະນະສະມາຊິກພັກ ໃຫ້ຮັກສາທາດແທ້ຊົນຊັ້ນກຳມະກອນ ແລະ ທັດສະນະປະຕິວັດຂອງພັກຢູ່ສະເໝີ. ຍ້ອນເຊື່ອມຊຶມຢ່າງເລິກເຊິ່ງຫລັກການທິດສະດີມາກ-ເລນິນ ກ່ຽວກັບບັນຫາການກຳອຳນາດຂອງພັກ ເປັນບັນຫາພື້ນຖານຂອງການປະຕິວັດສັງຄົມ, ປະທານ ໄກສອນ ພົມວິຫານ ຈຶ່ງເອົາໃຈໃສ່ເປັນປະຈຳຕໍ່ການກໍ່ສ້າງ ແລະ ປັບປຸງອຳນາດການປົກຄອງປະຕິວັດ, ສ້າງລັດ ໃຫ້ກາຍເປັນລັດຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນຢ່າງແທ້ຈິງ.

ກ່ຽວກັບວຽກງານອົງການແນວໂຮມ ແລະ ບັນດາອົງການຈັດຕັ້ງມະຫາຊົນ, ປະທານ ໄກສອນ ພົມວິຫານ ໄດ້ໃຫ້ຄວາມສຳຄັນເປັນພິເສດໃນສຶກສາອົບຮົມມະຫາຊົນ, ຊາວໜຸ່ມ, ແມ່ຍິງ, ກຳມະບານ ເພື່ອເປັນຄັນທຸງເຕົ້າໂຮມຄວາມສາມັກຄີທົ່ວປວງຊົນ, ເປັນກຳລັງແຮງຫລັກແຫລ່ງຜັກດັນໃຫ້ແກ່ພັກ. ເມື່ອເວົ້າເຖິງຄຸນງາມຄວາມດີຂອງເພິ່ນແມ່ນປ່ຽມລົ້ນດ້ວຍຄຸນສົມບັດສິນທຳປະຕິວັດອັນສູງສົ່ງ. ຕະຫລອດຊີວິດຂອງເພິ່ນ ໄດ້ອຸທິດເຫື່ອແຮງ ສະຕິປັນຍາເພື່ອຊາດ, ເພື່ອປະຊາຊົນ. ເພິ່ນເປັນຕົວແບບແຫ່ງນ້ຳໃຈຮັກເຊື້ອແພງຊາດ, ໂອບເອື້ອອາລີ, ມີມະນຸດສະທຳ, ມີສິນທຳ, ມີຄວາມຊື່ສັດບໍລິສຸດທ່ຽງທຳ, ມີຄວາມຈິງໃຈ ກໍ່ສ້າງພະນັກງານຮຸ່ນສືບທອດຕ່າງໆ, ດຳລົງຊີວິດແບບລຽບງ່າຍ, ຖະໜອມທ່ອມຕົວ, ຮ່ຳຮຽນນຳມະຫາຊົນ, ມັກການອ່ານ, ການຂຽນ, ການຄົ້ນຄວ້າຮ່ຳຮຽນຍົກລະດັບເລື້ອຍໆ. ເອົາໃຈໃສ່ສຶກສາອົບຮົມລູກເຕົ້າໃຫ້ເປັນຄົນຮູ້ຜູ້ດີ. ປະທານ ໄກສອນ ພົມວິຫານ ແມ່ນແວ່ນແຍງອັນໃສແຈ້ງ, ແມ່ນຄວາມເຫລື້ອມໃສສັດທາທີ່ໂດດເດັ່ນຂອງພັກ, ຂອງລັດ, ຂອງຊາດ ແລະ ພະນັກງານ, ສະມາຊິກພັກ ແລະ ປະຊາຊົນລາວບັນດາເຜົ່າຂອງພວກເຮົາຕະຫລອດໄປ.

ເພື່ອສືບຕໍ່ເຮັດໃຫ້ອຸດົມການຂອງເພິ່ນປາກົດຜົນເປັນຈິງ, ພວກເຮົາຕ້ອງພ້ອມກັນສືບຕໍ່ພາລະກິດປ່ຽນແປງໃໝ່ຂອງປະທານ ໄກສອນ ພົມວິຫານ ດ້ວຍບັນດາປັດໄຈສຳຄັນ ຄື: ສືບຕໍ່ບັ້ນດຳເນີນຊີວິດການເມືອງປັບປຸງປົວແປງພາຍໃນພັກໃຫ້ເລິກເຊິ່ງໜັກແໜ້ນ, ເສີມຂະຫຍາຍປະຊາທິປະໄຕ ພາຍໃນພັກ, ປັບປຸງພັກ ໃຫ້ມີຄວາມປອດໃສເຂັ້ມແຂງ ໜັກແໜ້ນ. ຄະນະພັກແຕ່ລະຂັ້ນ, ນັບແຕ່ສູນກາງລົງຮອດທ້ອງຖິ່ນຮາກຖານຄວນເປັນເຈົ້າການໝູນໃຊ້ບົດຮຽນການນຳພາຂອງພັກຈາກຊຸມປີຜ່ານມາ, ເພີ່ມທະວີຄວາມຮັບຜິດຊອບໃຫ້ສູງຂຶ້ນຕື່ມອີກ ໃນການປັບປຸງແບບແຜນວິທີນຳພາ ວິທີເຮັດວຽກໃຫ້ສົມຄູ່ກັບເງື່ອນໄຂໃໝ່ແຫ່ງການນຳໃຊ້ກົນໄກເສດຖະກິດດິຈິຕອນ ແລະ ເປີດກວ້າງການພົວພັນຮ່ວມມືກັບສາກົນ ໂດຍສະເພາະ ໃນສະພາບປັດຈຸບັນ ຍິ່ງຕ້ອງເພີ່ມຄວາມເອົາໃຈໃສ່ຮັບປະກັນສະຖຽນລະພາບທາງດ້ານການເມືອງ ແລະ ຄວາມສະຫງົບປອດໄພໃນສັງຄົມ, ສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ໃນພາລະກິດແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃຫ້ນັບມື້ຈະເລີນຮຸ່ງເຮືອງ, ຍົກສູງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນເປັນກ້າວໆ.

ໃນເງື່ອນໄຂທີ່ທົ່ວປະເທດມີສະຖຽນລະພາບທາງດ້ານການເມືອງ, ຄວາມສະຫງົບສຸກປອດໄພ ພວກເຮົາຕ້ອງພັດທະນາເສດຖະກິດ-ສັງຄົມໃຫ້ມີຈັງຫວະການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ວ່ອງໄວຂຶ້ນກວ່າເກົ່າ, ພວກເຮົາສືບຕໍ່ເສີມຂະຫຍາຍຈິນຕະນາການ ແລະ ແຜນນະໂຍບາຍໃໝ່ທາງດ້ານເສດຖະກິດທີ່ ປະທານ ໄກສອນ ພົມວິຫານ ໄດ້ວາງອອກໃນແນວທາງປ່ຽນແປງໃໝ່ຂອງພັກເຮົາ, ໃນກອງປະຊຸມຄົບຄະນະບໍລິຫານງານສູນກາງພັກຄັ້ງທີ 7 ສະໄໝທີ 2 ປີ 1979 ພວກເຮົາຕ້ອງອອກແຮງປະຕິບັດບັນດາຄາດໝາຍສູ້ຊົນແຕ່ນີ້ຫາປີ 2026 ຈະນຳພາປະເທດຊາດຫລຸດພົ້ນອອກຈາກສະພາວະປະເທດດ້ອຍພັດທະນາ ໃຫ້ປາກົດຜົນເປັນຈິງ, ສ້າງຜົນສຳເລັດໃໝ່ທີ່ໃຫຍ່ຫລວງກວ່າເກົ່າໃນການພັດທະນາເສດຖະກິດ-ສັງຄົມເພື່ອເປັນເງື່ອນໄຂຮັບປະກັນສະຖຽນລະພາບ ແລະ ຄວາມສະຫງົບອັນໜັກແໜ້ນ, ປັບປຸງ ແລະ ຍົກລະດັບຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນຕື່ມ, ຕ້ອງສຸມໃສ່ສ້າງພື້ນຖານເສດຖະກິດແຫ່ງຊາດ ໃຫ້ມີຄວາມແຂງແກ່ນເປັນກ້າວໆ.

ເນື່ອງໃນໂອກາດວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 102 ປີ (13/12/1920-13/12/2022) ປວງຊົນລາວບັນດາເຜົ່າ ຈະຈົດຈຳ ແລະ ຮູ້ບຸນຄຸນຢ່າງສຸດຊຶ້ງຕໍ່ການອຸທິດອັນໃຫຍ່ຫລວງຂອງປະທານ ໄກສອນ ພົມວິຫານ ເພື່ອຄວາມເປັນເອກະລາດແຫ່ງຊາດ ແລະ ຄວາມສົມບູນພູນສຸກຂອງປະຊາຊົນລາວບັນດາເຜົ່າ. ທົ່ວພັກ, ທົ່ວກອງທັບ ແລະ ທົ່ວປວງຊົນລາວທັງຊາດ ຈົ່ງສາມັກຄີພ້ອມກັນສືບທອດ ແລະ ເສີມຂະຫຍາຍພາລະກິດປະຕິວັດຂອງປະທານ ໄກສອນ ພົມວິຫານ ຜູ້ນຳທີ່ແສນເຄົາລົບຮັກທີ່ຍິ່ງໃຫຍ່ຂອງພວກເຮົາ ທີ່ມີກຽດສະຫງ່າໃຫ້ຍືນຍົງຕະຢູ່ກັບພວກເຮົາຕະຫລອດໄປ.

ປະທານ ໄກສອນ ພົມວິຫານ ຢູ່ໃນດວງໃຈຂອງພວກເຮົາຕະຫລອດກາລະນານ!

## ຄະນະ...

4,2% ແລະ ຄາດຄະເນໝົດປີຈະບັນລຸໄດ້ 4,4% (ມະຕິສະພາ 4,5%);

3) ການຜະລິດພະລັງງານໄຟຟ້າ ຄິດເປັນມູນຄ່າ 30.035 ຕື້ກີບ ເທົ່າກັບ 127,75% (ມະຕິສະພາ 23.509 ຕື້ກີບ);

4) ການຄ້າຕ່າງປະເທດເກີນດຸນ 911 ລ້ານໂດລາ ໃນນັ້ນ, ມູນຄ່າການສົ່ງອອກ 5.925 ລ້ານໂດລາ, ການນຳເຂົ້າ 5.014 ລ້ານໂດລາ;

ຄຽງຄູ່ກັບຜົນສຳເລັດທີ່ພົ້ນເດັ່ນດັ່ງກ່າວ, ຄະນະປະຈຳສະພາແຫ່ງຊາດ ເຫັນວ່າການຈັດຕັ້ງປະຕິບັດບາງຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2022 ຍັງມີຄວາມຄືບໜ້າໜ້ອຍ ແລະ ບາງຄາດໝາຍກໍຍັງມີຄວາມສ່ຽງທີ່ຈະບໍ່ບັນລຸຕາມມະຕິສະພາແຫ່ງຊາດ ເປັນຕົ້ນ:

- ລາຍໄດ້ແຫ່ງຊາດ (GNI) ຕໍ່ຫົວຄົນປະຕິບັດໄດ້ພຽງແຕ່ 1.729 ໂດລາ (ມະຕິສະພາ 2.358 ໂດລາ) ເທົ່າກັບ 73,32% ຂອງແຜນການ, ໄດ້ຫລຸດລົງຕໍ່ເນື່ອງຈາກ 2.161 ໂດລາ ໃນປີ 2020 ແລະ 2.004 ໂດລາ ໃນປີ 2021 ສາເຫດເນື່ອງຈາກອັດຕາເງິນເຟີ້ ແລະ ການຜັນຜວນຂອງອັດຕາແລກປ່ຽນທີ່ເພີ່ມຂຶ້ນສູງໃນປີ 2022;
- ຫລາຍຄາດໝາຍໃນຂົງເຂດວັດທະນະທຳສັງຄົມ ແລະ ສິ່ງແວດລ້ອມ ຍັງບໍ່ທັນສາມາດປະຕິບັດບັນລຸຕາມມະຕິສະພາແຫ່ງຊາດ ເປັນຕົ້ນຄາດໝາຍດ້ານການສຶກສາ ມີ 8 ຄາດໝາຍ, ສາທາລະນະສຸກ ມີ 4 ຄາດໝາຍ, ຖະແຫລງຂ່າວ ແລະ ວັດທະນະທຳ ມີ 5 ຄາດໝາຍ, ແຮງງານ ແລະ ສະຫວັດດີການສັງຄົມ ມີ 5 ຄາດໝາຍ; ວຽກງານພັດທະນາຊົນນະບົດ ແລະ ການແກ້ໄຂຄວາມທຸກຍາກ ປະຕິບັດໄດ້ລື່ນ 1 ຄາດໝາຍ, ບໍ່ໄດ້ຕາມແຜນ 6 ຄາດໝາຍ ແລະ ບໍ່ໄດ້ຮັບການຈັດຕັ້ງປະຕິບັດ 2 ຄາດໝາຍ.

2. ຄາດຄະເນ ການປະຕິບັດແຜນງົບປະມານແຫ່ງລັດ

1) ການປະຕິບັດແຜນລາຍຮັບ 11 ເດືອນ ບັນລຸໄດ້ 90,06%, ຄາດຄະເນໝົດປີ ຈະປະຕິບັດໄດ້ 102,70% ຂອງແຜນການເຫັນວ່າຈະປະຕິບັດໄດ້ເກີນແຜນການ ເຊິ່ງສາເຫດແມ່ນຍ້ອນມູນຄ່າຖານລາຍຮັບເພີ່ມຂຶ້ນຈາກການເພີ່ມຂຶ້ນຂອງອັດຕາເງິນເຟີ້ ສະເລ່ຍ 9 ເດືອນ ເພີ່ມຂຶ້ນເຖິງ 17,73% ທຽບໃສ່ຄາດໝາຍລາຍຮັບຕາມມະຕິສະພາແຫ່ງຊາດ GDP 192.145 ຕື້ກີບ ນັ້ນປະຕິບັດໄດ້ 16,88% ຂອງ GDP ແຕ່ຖ້າທຽບໃສ່ມູນຄ່າ GDP ຕົວຈິງໃນປີເທົ່າກັບ 15,27% (ປີ 2021 ແມ່ນ 15,63%) ເຊິ່ງເຫັນວ່າອັດຕາສ່ວນລາຍຮັບຕໍ່ GDP ດັ່ງກ່າວຍັງຢູ່ໃນລະດັບດຽວກັນຂອງປີຜ່ານມາ, ຈຶ່ງສະເໜີໃຫ້ລັດຖະບານ ຕ້ອງໄດ້ສູ້ຊົນຕື່ມເພື່ອໃຫ້ທັນກັບສະພາບຄວາມເປັນຈິງຂອງການພັດທະນາໃນປັດຈຸບັນ; ອີງຕາມການຕິດຕາມກວດກາຂອງສະພາແຫ່ງຊາດ ເຫັນວ່າສ່ວນໜຶ່ງແມ່ນຍ້ອນການປະຕິບັດມາດຕະການອຸດໜູນນຳເຂົ້ານ້ຳມັນເຊື້ອໄຟ ການຫລຸດອັດຕາອາກອນຊົມໃຊ້ເພື່ອຮັບປະກັນການຜະລິດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ(ຈຳນວນ2.819 ຕື້ກີບ), ອັດຕາເງິນເຟີ້ໄດ້ເພີ່ມຂຶ້ນສູງມີຜົນກະທົບໂດຍກົງເຮັດໃຫ້ຄວາມສາມາດຊື້ເງິນກີບຕົກຕ່ຳ ແລະ ເປັນສາເຫດພາໃຫ້ຖານລາຍຮັບ-ລາຍຈ່າຍຂອງງົບປະມານແຫ່ງລັດ ທຽບກັບຄວາມສາມາດຊື້ ແລະ ໃຊ້ຈ່າຍຕົວຈິງຂອງປະຊາຊົນ ແລະ ບັນດາພາກສ່ວນເສດຖະກິດຫລຸດໜ້ອຍຖອຍລົງຢ່າງຕໍ່ເນື່ອງ;

2) ການປະຕິບັດແຜນລາຍຈ່າຍໄດ້ພຽງ 72,56% ຂອງແຜນການປີ ເຫັນວ່າການເບີກຈ່າຍຕົວຈິງບໍ່ທັນການ, ບໍ່ທັນກັບສະພາບມີຄວາມຊັກຊ້າ ເປັນຕົ້ນການແຈ້ງຕົວເລກລົງທຶນຂອງລັດ, ການກວດຜ່ານເອກະສານເພື່ອຊຳລະໂຄງການປົກກະຕິ, ການດັດແກ້ມູນຄ່າໂຄງການລົງທຶນຂອງລັດທີ່ມີມູນຄ່າສູງ ທີ່ໄດ້ຜ່ານການກວດກາແລ້ວ ແລະ ສາມາດລົບອອກຈາກສາລະບານບັນຊີການລົງທຶນ ແຕ່ໃນຕົວຈິງກໍບໍ່ໄດ້ຮັບການຈັດຕັ້ງປະຕິບັດ; ມາຮອດປັດຈຸບັນຍັງບໍ່ທັນຈັດສັນງົບປະມານລົງທຶນຂອງລັດບ້ວງກອງທຶນທາງຈຳນວນ 700 ຕື້ກີບ ສຳລັບປີ 2022, ໃນຂະນະທີ່ມີຄວາມຮຽກຮ້ອງຕ້ອງການຈັດສັນງົບປະມານດັ່ງກ່າວເພື່ອສ້ອມແປງ ແລະ ປົກປັກຮັກ ສາເສັ້ນທາງທີ່ມີການເປ່ເພໃນຂອບເຂດທົ່ວປະເທດ.

3) ການປະຕິບັດຄາດໝາຍແຫລ່ງດຸນດ່ຽງຄວາມຕ້ອງການຊຳລະຕົ້ນທຶນກູ້ຢືມຈຳນວນ 16.900 ຕື້ກີບ, ປະຕິບັດໄດ້ພຽງປະມານ 8.891 ຕື້ກີບ ປະຕິບັດໄດ້ພຽງ 50%.

ຄຽງຄູ່ກັບຜົນສຳເລັດດັ່ງກ່າວ, ການເກັບລາຍຮັບທຽບໃສ່ GDP ແມ່ນປະຕິບັດໄດ້ພຽງ 15,27% (ມະຕິສະພາແມ່ນ 16,44%); ຜົນກວດສອບສະຫລຸບຂາດຕົວປີ 2021 ໄດ້ພົບເຫັນການລະເມີດວິໄນແຜນງົບປະມານ ຄື ລາຍຮັບອົງການກວດສອບກວດເຫັນເພີ່ມ 141,30 ຕື້ກີບ.

3. ຄາດຄະເນການປະຕິບັດແຜນເງິນຕາ

1) ຄະນະປະຈຳເຫັນການປະຕິບັດຄາດໝາຍແຜນເງິນຕາເປັນສິ່ງທ້າທາຍຫລາຍຄື ປະລິມານເງິນ M2 ເພີ່ມຂຶ້ນ 38,55% (ມະຕິສະພາແຫ່ງຊາດ 22%), ເຫັນວ່າ ບໍລິມາດເງິນເພີ່ມຂຶ້ນສູງພໍສົມຄວນເມື່ອທຽບໃສ່ມະຕິສະພາແຫ່ງຊາດ ແລະ ທຽບກັບຫລາຍປີຜ່ານມາ ເປັນສາເຫດໜຶ່ງທີ່ສົ່ງຜົນຕໍ່ການເພີ່ມຂຶ້ນຂອງເງິນເຟີ້ ແລະ ການອ່ອນຄ່າຂອງເງິນກີບທຽບກັບສະກຸນເງິນຕາຕ່າງປະເທດ;

2) ອັດຕາເງິນເຟີ້ສະເລ່ຍ 9 ເດືອນ 17,73% (ມະຕິສະພາແຫ່ງຊາດ 5%), ເງິນເຟີ້ໄດ້ເພີ່ມຂຶ້ນຈາກ 6,25% ໃນ ເດືອນ 1/2021 ຕໍ່ເນື່ອງມາຮອດເດືອນ 11/2022 ເປັນ 38,46% ເຫັນວ່າອັດຕາເງິນເຟີ້ເພີ່ມຂຶ້ນສູງຫລາຍ ເຊິ່ງໄດ້ສົ່ງຜົນກະທົບໂດຍກົງຕໍ່ຊີວິດການເປັນຢູ່ຂອງປະຊາຊົນ, ພະນັກງານ, ທະຫານ ແລະ ຕຳຫລວດທີ່ມີລາຍຮັບຄົງທີ່;

3) ອັດຕາແລກປ່ຽນ ເງິນກີບທຽບເງິນໂດລາອ່ອນຄ່າ19,44% ແລະທຽບເງິນບາດອ່ອນຄ່າ18,02% (ມະຕິສະພາແຫ່ງຊາດ ±5%) ເຫັນວ່າເງິນກີບໄດ້ອ່ອນຄ່າຕໍ່ເນື່ອງ ເມື່ອທຽບກັບເງິນໂດລາ ແລະ ເງິນບາດ ເຊິ່ງເປັນສາເຫດໜຶ່ງຂອງເງິນເຟີ້ທີ່ເພີ່ມຂຶ້ນຕໍ່ເນື່ອງ, ກະທົບຕໍ່ຕົ້ນທຶນສິນຄ້ານຳເຂົ້າ ແລະ ການຊຳລະໜີ້ສິນຕ່າງປະເທດທີ່ຄິດໄລ່ເປັນສະກຸນເງິນກີບເພີ່ມຂຶ້ນຫລາຍ. ຕໍ່ບັນຫາດັ່ງກ່າວສະເໜີໃຫ້ເພີ່ມທະວີການຄຸ້ມຄອງຮ້ານແລກປ່ຽນເງິນຕາໃຫ້ຖືກຕ້ອງຕາມກົດໝາຍ

ຄະນະປະຈຳສະພາແຫ່ງຊາດ ສະເໜີໃຫ້ລັດຖະບານຊີ້ແຈງຕື່ມກ່ຽວກັບສາເຫດໃນການຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດມາດຕະການທີ່ໄດ້ກຳນົດໃນມະຕິສະພາແຫ່ງຊາດ ທີ່ຍັງບໍ່ທັນຮັບປະກັນການບັນລຸບັນດາຄາດໝາຍຕາມມະຕິສະພາແຫ່ງຊາດ ແລະ ສະເໜີໃຫ້ລັດຖະບານເອົາໃຈໃສ່ສູ້ຊົນ ແລະ ສືບຕໍ່ສຸມໃສ່ປະຕິບັດຄາດໝາຍທີ່ບໍ່ທັນບັນລຸດັ່ງກ່າວ ສຳລັບ 3 ເດືອນທ້າຍປີ 2022 ແລະ ເອົາໃຈໃສ່ໃຫ້ບັນລຸຕາມການຄາດຄະເນໝົດປີ 2022 ແລະ ສືບຕໍ່ເອົາໃຈໃສ່ປະ ຕິບັດໃນປີ 2023 ເພື່ອຮັບປະກັນການ ບັນລຸເປົ້າໝາຍທີ 1 ຂອງແຜນພັດທະນາເສດຖະກິດ-ສັງຄົມທີ່ໄດ້ກຳນົດ ຄື: ເສດຖະກິດເຕີບໂຕຕໍ່ເນື່ອງ, ມີຄຸນນະພາບ, ມີຄວາມໝັ້ນຄົງ ແລະ ຍືນຍົງ.

### II. ຕໍ່ກັບທິດທາງແຜນການປີ 2023

ຕໍ່ກັບທິດທາງແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານ ແລະ ແຜນເງິນຕາ ປີ 2023 ທີ່ໄດ້ກຳນົດຄາດໝາຍສູ້ຊົນ, ແຜນວຽກຈຸດສຸມ ແລະ ມາດຕະການຈັດ ຕັ້ງປະຕິບັດ, ຄະນະປະຈຳສະພາແຫ່ງຊາດ ສະແດງ ຄວາມຊົມເຊີຍ

ອ່ານຕໍ່ສະບັບໜ້າ...




# ຄຸນສົມບັດສິນທຳປະຕິວັດ ຄືວຽກງານທີ່ບໍ່ສາມາດປະຖິ້ມໄດ້

ໂດຍ: ດັ້ນກົບເມກ

ທ່ານ ພູມີ ວົງວິຈິດ ໄດ້ຂຽນໄວ້ໃນປຶ້ມຄຸນສົມບັດໃໝ່ ແລະ ສິນທຳປະຕິວັດ ໜ້າ 154 ວ່າ: ຄຸນສົມບັດໃໝ່ຂອງພວກເຮົາ ປຸກລະດົມໃຫ້ມີຈິດໃຈ ເພື່ອນມິດອັນໃສແຈ້ງ... ພ້ອມນີ້ ກໍຕ້ອງຕຳນິຈຳແນກຢ່າງເຄັ່ງຂຶມຕໍ່ຜູ້ທີ່ເຮັດໃຫ້ແນວຄິດ ເພື່ອນມິດກາຍເປັນການພົວພັນດ້ວຍເງິນຄຳ ຫລື ດົ້ດ້ານປົກປິດເອົາກັນ, ເຕົ້າໂຮມກັນມ້າງເພຜົນປະໂຫຍດຂອງສັງຄົມ, ສວຍໃຊ້ແນວຄິດເພື່ອນມິດເພື່ອເປັນໂອກາດຫາລ້ຳຫາລວຍ....

ເມື່ອວັນທີ 18 ພະຈິກ 2022 ທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ໄດ້ໃຫ້ກຽດໂອ້ລົມຕໍ່ກອງປະຊຸມວຽກງານການເມືອງ-ແນວຄິດທົ່ວປະເທດ ຄັ້ງທີ V ເຊິ່ງຜູ້ຂຽນຂໍນຳເອົາບາງຈຸດສະເໜີດັ່ງນີ້: ວຽກງານການເມືອງ-ແນວຄິດ ຖືເປັນສະໜາມຮົບອັນໜຶ່ງໃນວຽກງານຂອງພັກໄລຍະໃໝ່... ວຽກງານການເມືອງ-ແນວຄິດຄື: ສະໜາມຮົບການຕໍ່ສູ້ລະຫວ່າງອັນຖືກກັບອັນຜິດຢູ່ໃນກະໂຕສະມາຊິກພັກເຮົາ ເພື່ອໃຫ້ທຸກຄົນເອົາຊະນະແນວຄິດທີ່ບໍ່ຖືກຕ້ອງ... ແນ່ນອນບໍ່ປ່ອຍໃຫ້ແນວຄິດບໍ່ຖືກຕ້ອງ, ຜິດເຂວກືນກິນເນື້ອທີ່ ແລະ ຄອບງຳມັນສະໝອງ ຫລື ແນວຄິດຂອງສະມາຊິກພັກ ແລະ ປະຊາຊົນເຮົາເດັດຂາດ... ຢາກເຮັດໄດ້ຕ້ອງອີງໃສ່ສະມາຊິກພັກເຮົາແຕ່ເທິງລົງລຸ່ມ ຕ້ອງປະຕິບັດຄຳຂວັນທີ່ວ່າ: ເວົ້າຕ້ອງໄປຄຽງຄູ່ກັບການກະທຳ... ເຮັດໃຫ້ຄືກັບເວົ້າ, ການນຳພາທີ່ດີ ຄືການນຳພາທີ່ເປັນແບບຢ່າງ ໝາຍເຖິງຜູ້ນຳພາຕ້ອງເປັນແບບຢ່າງທີ່ດີ... ຜູ້ນຳພາຕ້ອງມີຄຸນນະທຳ, ມີວິໄສທັດ... ຮູ້ຄວາມປາຖະໜາຂອງປະຊາຊົນ..., ພັກເຮົາຕ້ອງໄດ້ແກ້ໄຂບັນດາບັນຫາທີ່ປະຊາຊົນ, ພະນັກງານຕັ້ງຂຶ້ນ ແລະ ປາຖະໜາຢາກໃຫ້ພັກເຮົາແກ້ໄຂໃນນັ້ນຄື:

1. ການສໍ້ລາດບັງຫລວງ;
2. ຄວາມບໍ່ດຸນດ່ຽງໃນການພັດທະນາ;
3. ຄວາມເຊື່ອມສໍ້ຂອງສັງຄົມ;
4. ການຂາດປະສິດທິພາບຂອງກົນຈັກ ບໍ່ໃຫ້ກົງຈັກແຂງກະດ້າງອາຍາສິດ, ແກ້ໄຂກົນໄກກວດກາຍາກ, ມີຊ່ອງຫວ່າງໃຫ້ຄົນສວຍໃຊ້ເຮັດສິ່ງຜິດໄດ້ງ່າຍ...

ສັງລວມຕາມຄຳເຫັນຂອງເພິ່ນຕໍ່ກອງປະຊຸມວຽກງານການເມືອງ-ແນວຄິດນັ້ນ ແມ່ນມີຈຸດທີ່ເນັ້ນແກ້ໄຂສະມາຊິກພັກ-ພະນັກງານທີ່ມີແນວຄິດບໍ່ຖືກຕ້ອງຕາມແນວທາງຂອງພັກ ສຳຄັນແມ່ນລະວັງພວກສວຍໃຊ້ໜ້າທີ່ຕຳແໜ່ງປະພຶດຕົນເປັນອາຍາສິດ...!




## ເລືອກພາສາ

# ໂດຍ: ປ່າວກະບື

ລູກຊາຍອອກປາກຖາມຜູ້ເປັນພໍ່ວ່າ:

"ພໍ່ໆ... ເທວະທູດ ທີ່ຮັກສາປະຕູສະຫວັນນັ້ນ ປາກພາສາອັງກິດ ຫລື ພາສາຝຣັ່ງ?"

ຝ່າຍພໍ່ຮູ້ສຶກແປກໃຈ ເລີຍຖາມຄືນວ່າ:

"ເປັນຫຍັງລູກຈຶ່ງຢາກຮູ້?" "ຄືຈັ່ງຊີ້ນ່າພໍ່... ລູກຢາກຮູ້ໃຫ້ມັນແນ່ນອນ ແລ້ວຈະເລືອກຮຽນໜຶ່ງໃນສອງພາສາຫັ້ນໃຫ້ເກັ່ງໆ ຕໍ່ໄປເມື່ອໄດ້ພົບກັບເທວະທູດ ລູກຈຶ່ງຊິສາມາດຕອບຄຳຖາມຂອງເພິ່ນໄດ້ດີ".

## CHOOSING ALNGUAGE

# By: BAOKBU

A boy asked his father:

"Father, does Saint Peter who guards the Heaven gate speak English on French?"

The father was surprised, he asked:

"Why do you want to know?" "Father, I want to know it exactly in order that I choose one of the two as the main language and study it very well. Afterwards, when I meet Saint Peter, I will be able to answer well his questions."

# ອີຣານ ຄົ້ນພົບແຫລ່ງນ້ຳມັນສຳຮອງແຫ່ງໃໝ່

**ແປ ແລະ ຮຽບຮຽງ: ທະນາກອນ**

ອີງຕາມການລາຍງານຂ່າວໃຫ້ຮູ້ວ່າ: ໃນວັນທີ 6 ທັນວາ 2022 ທ່ານ ເມດີ ຟາຄົວ ຜູ້ອຳນວຍການການຂຸດສຳຫລວດຂອງບໍລິສັດນ້ຳມັນແຫ່ງຊາດອີຣານ (NIOC) ໄດ້ເປີດເຜີຍການຄົ້ນພົບແຫລ່ງນ້ຳມັນແຫ່ງໃໝ່ໃນພາກຕາເວັນຕົກສຽງໃຕ້ຂອງປະເທດ.

ທ່ານ ເມດີ ຟາຄົວ ເປີດເຜີຍວ່າ: ໃນຂະນະດຽວກັນນີ້ ຜູ້ຊ່ຽວຊານຂອງອີຣານ ກຳລັງວິໄຈແຫລ່ງຂຸດສຳຫລວດນອກຊາຍຝັ່ງໃນນ່ານນ້ຳຕອນໃຕ້ຂອງປະເທດ ເຊິ່ງມີປະລິມານແກັສສຳຮອງຕາມການຄາດຄະເນຢູ່ 8,5 ແສນລ້ານແມັດກ້ອນ.

ທ່ານ ເມດີ ຟາຄົວ ກ່າວວ່າ: "ຖືເປັນຄັ້ງທຳອິດທີ່ອີຣານ ໄດ້ຜະລິດເຮືອບິນນ້ອຍສຳລັບການວັດແທກຄ່າຄວາມເຂັ້ມຂຸ້ນຂອງສະໜາມແມ່ເຫລັກທາງອາກາດ ເພື່ອໃຊ້ລະບຸແຫລ່ງໄຮໂດຣກາກບອນ ໃນຄວາມເລິກໃຕ້ດິນສູງເຖິງ 7.000 ແມັດ"

ບໍລິສັດດັ່ງກ່າວ ກ່າວອີກວ່າ: ເຮືອບິນນ້ອຍດັ່ງກ່າວ ຈະມີການສຳຫລວດພື້ນທີ່ປະມານໜຶ່ງໃນສິບຂອງພື້ນທີ່ທັງໝົດຂອງອີຣານ ເພື່ອເກັບຮວບຮວມຂໍ້ມູນທີ່ກ່ຽວຂ້ອງ.

ອີຣານມີແຫລ່ງນ້ຳມັນສຳຮອງຂະໜາດໃຫຍ່ອັນດັບ 4 ຂອງໂລກ ຮອງຈາກເວເນຊູເອລາ, ຊາອຸດີອາຣະເບຍ ແລະ ການາດາ ໂດຍໜຶ່ງໃນແຫລ່ງແກັສທີ່ພິສູດແລ້ວຂະໜາດໃຫຍ່ທີ່ສຸດມີແກັສຢູ່ເກືອບ 34 ພັນຕື້ແມັດກ້ອນ.

**ແຫລ່ງຂໍ້ມູນ: CNN**

# ເປຣູ ໄດ້ຜູ້ນຳຍິງຄົນທຳອິດ

**ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ**



ມີການລາຍງານຂ່າວໃຫ້ຮູ້ວ່າ: ທ່ານ ນາງ ດີນາ ໂບລົວເຕ ຮອງປະທານາທິບໍດີເປຣູ ເຂົ້າຮັບຕຳແໜ່ງຜູ້ນຳປະເທດຄົນໃໝ່ ຫລັງທ່ານ ເປໂດຣ ກັສຕິໂຢ ປະທານາທິບໍດີເປຣູ ພະຍາຍາມຈະຍຸບສະພາຈົນເກີດວິກິດການທາງການເມືອງ ເຊິ່ງເປັນການກະທຳທີ່ສານລັດຖະທຳມະນູນລະບຸວ່າເປັນການກໍ່ລັດຖະປະຫານ.

ທ່ານ ນາງ ດີນາ ໂບລົວເຕ ໄດ້ເຂົ້າພິທີສາບານຕົນເປັນປະທານາທິບໍດີຄົນໃໝ່ພາຍໃນລັດຖະສະພາຢູ່ນະຄອນຫລວງລິມາໃນວັນທີ 7 ທັນວາຜ່ານມາ ເຊິ່ງຖືເປັນຜູ້ຍິງຄົນທຳອິດທີ່ໄດ້ຂຶ້ນເປັນຜູ້ນຳປະເທດເປຣູ ແລະ ເປັນປະທານາທິບໍດີຄົນທີ 6 ໃນຮອບ 4 ປີ ນັບແຕ່ປີ 2018. ຂະນະທີ່ທ່ານ ເປໂດຣ ກັສຕິໂຢ ຖືກສະພາລົງມະຕິຢ່າງຫລວງຫລາຍໃນການຖອດຖອນທ່ານອອກຈາກຕຳແໜ່ງ ແລະ ທ່ານໄດ້ຖືກເຈົ້າໜ້າທີ່ຕຳຫລວດຄວບຄຸມຕົວໄວ້.

ຜູ້ນຳປະເທດຄົນໃໝ່ຂຶ້ນສູ່ຕຳແໜ່ງທ່າມກາງສະຖານະການການເມືອງທີ່ຕົກຢູ່ໃນຄວາມເຄັ່ງຕຶງ ແລະ ວຸ້ນວາຍ, ເຖິງຢ່າງໃດກໍຕາມ, ທ່ານ ນາງ ດີນາ ໂບລົວເຕ ກ່າວໃນການສາບານຕົນວ່າ: ທ່ານເຂົ້າຮັບຕຳແໜ່ງປະທານາທິບໍດີດ້ວຍຄວາມເນັ້ນໜັກຮູ້ໃນໜ້າທີ່ຄວາມຮັບຜິດຊອບຂອງຕົນເອງ ແລະ ໄດ້ກຽມຈັດຕັ້ງລັດຖະບານແຫ່ງຊາດທີ່ມີຄວາມເປັນອັນໜຶ່ງອັນດຽວກັນ ທັງໃຫ້ສັນຍາວ່າຈະຕໍ່ສູ້ກັບການທຸຈະລິດອັນໜ້າລະອາຍເຊິ່ງກັດກິນທຳລາຍປະເທດ.

ສຳລັບການລົງມະຕິຖອດຖອນທ່ານ ເປໂດຣ ກັສຕິໂຢ ນັ້ນ, ສະມາຊິກສະພານິຕິບັນຍັດລົງມະຕິເຫັນດີດ້ວຍຄະແນນ 101 ສຽງ, ຄັດຄ້ານ 6 ສຽງ ແລະ ບໍ່ອອກສຽງ 10 ສຽງ.

**ແຫລ່ງຂໍ້ມູນ: CNN**

## ຄາດໝາຍ...

ຄົ້ນຄວ້ານຳໃຊ້ທຸກເຄື່ອງມື ແລະ ມາດຕະການຕາມຄວາມສາມາດ ເພື່ອຮັກສາສະຖຽນລະພາບການເງິນ-ເງິນຕາແຫ່ງຊາດ ຫລຸດຜ່ອນຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນ ທັງເປັນການຈັດຕັ້ງປະຕິບັດແຜນເງິນຕາທີ່ສະພາແຫ່ງຊາດໄດ້ຮັບຮອງ ດັ່ງນີ້:

**ນະໂຍບາຍເງິນຕາ:** ໄດ້ຈັດຕັ້ງປະຕິບັດນະໂຍບາຍເງິນຕາແບບປະສົມປະສານ ໃນທິດທາງທີ່ຮັດກຸມຫລາຍຂຶ້ນ ເພື່ອຮັກສາສະຖຽນລະພາບທາງດ້ານເງິນຕາ-ດ້ານລາຄາ ແລະ ປະກອບສ່ວນຊ່ວຍຊຸກຍູ້ການຟື້ນຕົວ-ການສ້າງຄວາມເຂັ້ມແຂງໃຫ້ພື້ນຖານເສດຖະກິດ ດ້ວຍການ:

- ປັບເພີ່ມອັດຕາດອກເບ້ຍພື້ນຖານຂອງທະນາຄານແຫ່ງ ສປປ ລາວ ສະກຸນເງິນກີບ ໄລຍະສັ້ນບໍ່ເກີນ 7 ວັນ ສອງຄັ້ງ ຈາກ 3% ຕໍ່ປີ ເປັນ 3,1% ຕໍ່ປີ ໃນເດືອນພຶດສະພາ ແລະ ເປັນ 6,5% ຕໍ່ປີ ໃນເດືອນຕຸລາ;

- ປັບເພີ່ມອັດຕາສ່ວນເງິນແຮຝາກບັງຄັບ ຈາກ 3% ເປັນ 5% ສຳລັບສະກຸນເງິນກີບ ໃນເດືອນພຶດສະພາ;

- ອອກຈຳໜ່າຍພັນທະບັດທະນາຄານ ແຫ່ງ ສປປລາວ ໄລຍະສັ້ນອາຍຸ 6 ເດືອນ, ອັດຕາດອກເບ້ຍ 20% ຕໍ່ປີ, ໃນວົງເງິນ 5.000 ຕື້ກີບ ໃຫ້ແກ່ມວນຊົນ ຍົກເວັ້ນທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຮັບເງິນຝາກ ນັບແຕ່ວັນທີ 15/6/2022 ເຖິງ 15/11/2022 ສາມາດຈຳໜ່າຍໄດ້ 4.614 ຕື້ກີບ ກວມເອົາ 92,28%;

- ປະກອບສ່ວນໃນການແກ້ໄຂສະພາບຄ່ອງດ້ານງົບປະມານ ພາຍໃຕ້ຂອບກົດໝາຍດ້ວຍການຈັດຕັ້ງປະຕິບັດການປະມູນພັນທະບັດຄັງເງິນຢູ່ທະນາຄານ ແຫ່ງ ສປປລາວ ເພື່ອຈຳໜ່າຍໃຫ້ທະນາຄານທຸລະກິດ ແລະ ກອງທຶນຕ່າງໆ ໄດ້ທັງໝົດ 778,8 ຕື້ກີບ;

- ໄດ້ສະໜອງແຫລ່ງທຶນໃຫ້ແກ່ກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ (SMEs) ຈຳນວນ 100 ຕື້ກີບ ເພື່ອປ່ອຍກູ້ໃຫ້ SMEs;

- ໄດ້ປະກອບສ່ວນສະໜອງແຫລ່ງທຶນສະໜອງທຶນໃຫ້ແກ່ກອງທຶນພັດທະນາໄຊສົມບູນ ຈຳນວນ 50 ຕື້ກີບຕໍ່ປີ; ພ້ອມກັນນີ້, ກໍໄດ້ສືບຕໍ່ປະກອບສ່ວນສົ່ງເສີມວຽກງານແກ້ໄຂຄວາມທຸກຍາກ ແລະ ວຽກງານສາມສ້າງ ຜ່ານການປ່ອຍສິນເຊື່ອຂອງທະນາຄານນະໂຍບາຍ; ເຊິ່ງໃນໄລຍະ 9 ເດືອນຕົ້ນປີ 2022 ໄດ້ປ່ອຍສິນເຊື່ອ 221,67 ຕື້ກີບ; ປະກອບສ່ວນແກ້ໄຂບັນຫາແຫລ່ງທຶນຕິດພັນກັບການປັບປຸງໂຄງສ້າງທະນາຄານທຸລະກິດລັດ;

- ໄດ້ສືບຕໍ່ປະກອບສ່ວນແກ້ໄຂຜົນກະທົບຈາກພະຍາດໂຄວິດ-19 ແລະ ກະຕຸ້ນການຟື້ນຕົວຂອງເສດຖະກິດ ດ້ວຍການ: ສືບຕໍ່ຈັດຕັ້ງປະຕິບັດນະໂຍບາຍຜ່ອນຜັນດ້ານສິນເຊື່ອ ຄື: ເລື່ອນການຊຳລະໜີ້, ປັບຫລຸດອັດຕາດອກເບ້ຍ ແລະ ຄ່າທຳນຽມ, ສະໜອງເງິນກູ້ບ້ວງໃໝ່ ແລະ ປັບໂຄງສ້າງໜີ້ທີ່ໄດ້ຮັບຜົນກະທົບ, ຮອດທ້າຍເດືອນກັນຍາ, ທະນາຄານທຸລະກິດໄດ້ປະຕິບັດນະໂຍບາຍຜ່ອນຜັນດ້ານສິນເຊື່ອທັງໝົດ ໃຫ້ແກ່ລູກຄ້າ 4.833 ລາຍ ລວມມູນຄ່າ 15.996,68 ຕື້ກີບ (13,3% ຂອງຍອດເຫລືອສິນເຊື່ອທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ), ນະໂຍບາຍຜ່ອນຜັນດ້ານສິນເຊື່ອທັງໝົດໃຫ້ແກ່ລູກຄ້າ 2,508 ລາຍ ລວມມູນຄ່າ 8,93 ຕື້ກີບ ແລະ ສືບຕໍ່ຕິດຕາມຄຸ້ມຄອງການຈັດຕັ້ງປະຕິບັດໂຄງການສິນເຊື່ອເພື່ອຊຸກຍູ້ການຜະລິດ ແລະ ແກ້ໄຂຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ສະເພາະໄລຍະ 9 ເດືອນຕົ້ນປີ 2022 ໄດ້ມີການຖອນນຳໃຊ້ຈຳນວນ 21,74 ຕື້ກີບ ແລະ ຮອດທ້າຍເດືອນກັນຍາ 2022 ມີຍອດເຫລືອ 1.670,6 ຕື້ກີບ, ໃນນີ້ ສິນເຊື່ອໃຫ້ຂະແໜງກະສິກຳ ກວມເອົາ 51,62% ແລະ ຂະແໜງອຸດສາຫະກຳ-ປຸງແຕ່ງ ກວມເອົາປະມານ 27,24% ຂອງຍອດສິນເຊື່ອທີ່ໄດ້ອະນຸມັດທັງໝົດ ສ່ວນທີ່ເຫລືອແມ່ນສິນເຊື່ອໃຫ້ຂະແໜງບໍລິການ, ການຄ້າ ແລະ ຂະແໜງຫັດຖະກຳ.

ນະໂຍບາຍອັດຕາແລກປ່ຽນ: ໄດ້ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫລາດທີ່ມີການຄຸ້ມຄອງຂອງລັດ ໂດຍການກຳນົດອັດຕາແລກປ່ຽນອ້າງອີງປະຈຳວັນຂອງທະນາຄານແຫ່ງ ສປປລາວ ເພື່ອເປັນບ່ອນອີງໃຫ້ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາຕົວແທນ ໃນການກຳນົດອັດຕາແລກປ່ຽນຂອງຕົນ ຕາມຂອບທີ່ລະບຽບການກຳນົດໄວ້ ແນໃສ່ໃຫ້ອັດຕາແລກປ່ຽນໝັ້ນຄົງສອດຄ່ອງກັບດຸນຍະພາບທາງດ້ານເສດຖະກິດ-ເງິນຕາ, ໃນນີ້, ໄດ້ປັບປຸງລະບຽບກ່ຽວກັບການກຳນົດອັດຕາແລກປ່ຽນ ໂດຍໄດ້ປັບປຸງການກຳນົດອັດຕາແລກປ່ຽນ ໃນຕົ້ນເດືອນຕຸລາ ຂອງທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາຕົວແທນ ໃນການກຳນົດອັດຕາແລກປ່ຽນປະຈຳວັນຂອງຕົນຈາກເດີມທີ່ຢູ່ໃນລະດັບບໍ່ເກີນ +1,5% ເປັນ +3% ສຳລັບຮ້ານແລກປ່ຽນເງິນຕາຕົວແທນ ແລະ 14,5% ສຳລັບທະນາຄານທຸລະກິດທຽບກັບອັດຕາອ້າງອີງຂອງທະນາຄານແຫ່ງ ສປປລາວ.

ພ້ອມກັນນີ້, ໃນສະພາບທີ່ລາຄານ້ຳມັນເຊື້ອໄຟຢູ່ໃນສາກົນໄດ້ເພີ່ມຂຶ້ນສູງ ແລະ ຄວາມສາມາດໃນການສະໜອງເງິນຕາຕ່າງປະເທດມີຈຳກັດ ແລະ ບໍ່ພຽງພໍກັບຄວາມຕ້ອງການໃນການຊຳລະກັບຕ່າງປະເທດ, ພາຍໃຕ້ການເຫັນດີຈາກລັດຖະບານ ທະນາຄານແຫ່ງ ສປປລາວ ໄດ້ສົມທົບກັບກະຊວງການເງິນ ຄົ້ນຄວ້າຈັດສັນແຫລ່ງທຶນ ເພື່ອດັດສົມເງິນຕາຕ່າງປະເທດໃຫ້ແກ່ການນຳເຂົ້ານ້ຳມັນເຊື້ອໄຟ; ເຊິ່ງໃນໄລຍະ 9 ເດືອນຕົ້ນປີ 2022 ລະບົບທະນາຄານໄດ້ສະໜອງເງິນຕາຕ່າງປະເທດ ສຳລັບການນຳເຂົ້ານ້ຳມັນເຊື້ອໄຟປະມານ 598,84 ລ້ານໂດລາທຽບເທົ່າ (ໃນນີ້, ມີແຫລ່ງເງິນຈາກງົບປະມານແຫ່ງລັດ ຈຳນວນ 47 ລ້ານໂດລາ; ທະນາຄານແຫ່ງ ສປປລາວ ຈຳນວນ 156,72 ລ້ານໂດລາ ແລະ ທະນາຄານທຸລະກິດ ຈຳນວນ 395,11ລ້ານໂດລາ), ກວມເອົາສະເລ່ຍປະມານ 70,09% ຂອງມູນຄ່າການນຳເຂົ້າ ເຊິ່ງໄດ້ເພີ່ມຂຶ້ນເກືອບເທົ່າຕົວເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ.

ການຄຸ້ມຄອງເງິນຕາຕ່າງປະເທດ: ເພື່ອປະກອບສ່ວນສ້າງຄວາມເຂັ້ມແຂງໃຫ້ແກ່ຖານະເງິນຕາຕ່າງປະເທດຂອງຊາດ ແລະ ປະກອບສ່ວນໃນການຮັກສາສະຖຽນລະພາບທາງດ້ານເງິນຕາ ຕົ້ນຕໍໄດ້:

1. ສຳເລັດການປັບປຸງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ໄດ້ຖືກຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະມາຊິກສະພາແຫ່ງຊາດ ຊຸດທີ IX ໃນເດືອນກໍລະກົດ 2022 ແລະ ໄດ້ຮັບການປະກາດໃຊ້ຈາກປະທານປະເທດໃນວັນທີ 19 ສິງຫາ 2022 ຜ່ານມານີ້, ຊຸ້ມຂ້ຽວສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ຈຳນວນ 25 ສະບັບ ໃຫ້ສຳເລັດພາຍໃນຕົ້ນປີ 2023, ໃນນີ້, ສະເພາະໃນປີ 2022 ແມ່ນກຳລັງເລັ່ງສຸມໃສ່ສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ທີ່ຕິດພັນກັບການຄຸ້ມຄອງທຸລະກິດແລກປ່ຽນເງິນຕາ, ການຄຸ້ມຄອງເງິນຕາຕ່າງປະເທດຕິດພັນກັບການຄ້າລະຫວ່າງປະເທດ, ການລົງທຶນໂດຍກົງຈາກຕ່າງປະເທດ, ການຊຳລະຂ້າມແດນ, ການຄຸ້ມຄອງເງິນຕາຕ່າງປະເທດໃນເຂດເສດຖະກິດພິເສດປະມານ 10 ສະບັບ;

2. ປັບປຸງການຄຸ້ມຄອງທຸລະກິດແລກປ່ຽນເງິນຕາໃຫ້ມີຄວາມເຂັ້ມງວດ ດ້ວຍການກວດກາ ແລະ ປະຕິບັດມາດຕະການຕໍ່ຮ້ານແລກປ່ຽນເງິນຕາຕົວແທນ ແລະ ຫົວໜ່ວຍແລກປ່ຽນເງິນຕາແບບຜິດກົດໝາຍ ຢ່າງຕໍ່ເນື່ອງຄື:

- ຈຳກັດການເຄື່ອນໄຫວຂອງຮ້ານແລກປ່ຽນເງິນຕາຕົວແທນ ໂດຍໄດ້ອອກຂໍ້ຕົກລົງວ່າດ້ວຍການບໍລິການແລກປ່ຽນເງິນຕາຂອງທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາຕົວແທນ ເລກທີ 449/ທຫລ, ລົງວັນທີ 14 ມິຖຸນາ 2022 ເຊິ່ງໄດ້ກຳນົດໃຫ້ຮ້ານແລກປ່ຽນເງິນຕາຕົວແທນສາມາດຊື້-ຂາຍເງິນຕາໄດ້ກັບແຕ່ບຸກຄົນເທົ່ານັ້ນ ແລະ ທຸກທຸລະກຳແລກປ່ຽນເງິນຕາແມ່ນຈຳກັດຂອບເຂດບໍ່ເກີນ15ລ້ານກີບ/ຄົນ/ວັນພ້ອມທັງບໍ່ອະນຸຍາດໃຫ້ມີການຊື້-ຂາຍເງິນຕາກັບນິຕິບຸກຄົນ ແລະ ການຈັດຕັ້ງ;

-ກວດກາປະເມີນຈັດປະເພດຮ້ານແລກປ່ຽນເງິນຕາຕົວແທນ ອອກເປັນ 3 ປະເພດ: ປະເພດ A ປະຕິບັດລະບຽບໄດ້ຢ່າງຖືກຕ້ອງຄົບຖ້ວນ, ປະເພດ B ປະຕິບັດລະບຽບໄດ້ສ່ວນຫລາຍ, ປະເພດ C ປະຕິບັດລະບຽບໄດ້ໜ້ອຍຫລາຍ ຫລື ບໍ່ໄດ້; ໄດ້ຖອນໜັງສືອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາຂອງຮ້ານແລກປ່ຽນເງິນຕາຕົວແທນສອງຮ້ອຍກວ່າຮ້ານ ແລະ ແຈ້ງໃຫ້ສັງຄົມຊາບ;

- ສົມທົບກັບກະຊວງການເງິນ ເພື່ອກວດກາຄືນການປະຕິບັດພັນທະອາກອນຂອງຮ້ານແລກປ່ຽນເງິນຕາຕົວແທນໃນໄລຍະຜ່ານມາ ເປັນບ່ອນອີງໃນການດຳເນີນມາດຕະການຕໍ່ຮ້ານທີ່ບໍ່ປະຕິບັດພັນທະ ຫລື ປະຕິບັດພັນທະບໍ່ສອດຄ່ອງກັບຕົວຈິງ;

- ສົມທົບກັບເຈົ້າໜ້າທີ່ຕຳຫລວດ ເພື່ອຕິດຕາມ, ກວດກາ ການເຄື່ອນໄຫວທັງຮ້ານແລກປ່ຽນເງິນຕາທີ່ເປັນຕົວແທນ ແລະ ບັນດາບຸກຄົນ, ນິຕິບຸກຄົນ ທີ່ສົງໄສວ່າໃຫ້ບໍລິການແລກປ່ຽນເງິນຕາ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ໄດ້ປະຕິບັດມາດຕະການຈຳນວນໜຶ່ງຕໍ່ຜູ້ທີ່ກະທຳຜິດ ລວມທັງສົ່ງສຳນວນຄະດີຕໍ່ໄອຍະການ 7 ກໍລະນີ;

-ຮ່ວມເຮັດວຽກກັບຂະແໜງສື່ມວນຊົນຫລາຍຂຶ້ນ ເພື່ອຂໍຄວາມຮ່ວມມືໃນການຊ່ວຍເປັນກະບອກສຽງໃນການໂຄສະນາກ່ຽວກັບໂທດຂອງການເຄື່ອນໄຫວແລກປ່ຽນເງິນຕາຕ່າງປະເທດແບບຜິດກົດໝາຍ ແລະ ລະດົມມວນຊົນໃນການຊ່ວຍສະກັດກັ້ນ ແລະ ຕ້ານການເຄື່ອນໄຫວທີ່ບໍ່ຖືກຕ້ອງດັ່ງກ່າວ,

3. ສົມທົບກັບພາກສ່ວນກ່ຽວຂ້ອງສຳເລັດການສ້າງກົນໄກຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາການປະຕິບັດເງື່ອນໄຂຊຳລະຜ່ານລະບົບທະນາຄານ ສຳລັບການໂອນກຳມະສິດນຳໃຊ້ທີ່ດິນ ແລະ ພາຫະນະ ເພື່ອປະກອບສ່ວນສ້າງເງື່ອນໄຂຫລຸດ

ອ່ານຕໍ່ສະບັບໜ້າ...

**ຜູ້ຊີ້ນຳ**
ທ່ານ ສີງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ
ທ່ານ ເປຄຳ ລໍຄຳສອນ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ສຸພາວັນ ຫອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ